ກະຊວງພະລັງງານ ແລະ ບໍ່ແຮ່
ກົມຄຸ້ມຄອງບໍ່ແຮ່

ຄູ່ມືແນະນຳ

ຂັ້ນຕອນ
ການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່
(ໂຄງການທີ່ມີເຂດສຳປະທານບໍ່ແຮ່ເປັນຂອງຕົນເອງ ທີ່ດຳເນີນຕາມກົດໝາຍ)
ເຫຼັ້ມທີ I



ສະບັບທີ: 001, ເດືອນ ທັນວາ 2021

ຖະໜົນໜອງບອນ, ນະຄອນຫຼວງວຽງຈັນ; ເບີໂທ: (+856) 21 415123; ແຟັກ: 413015; ອີເມວ: dom_reports@yahoo.com

ສາລະບານ

ໝວດທີ 1:.....1
ກິດຈະການກ່ຽວກັບແຮ່ທາດ (ໂຄງການມີເຂດສຳປະທານບໍ່ແຮ່ເປັນຂອງຕົນເອງ ທີ່ດຳເນີນຕາມກິດໝາຍ).....1
ພາກທີ I:.....1
ຂັ້ນຕອນກ່ອນກ້າວເຂົ້າສູ່ການພັດທະນາບໍ່ແຮ່ (ກ່ອນເຊັນສັນຍາສຳປະທານພັດທະນາບໍ່ແຮ່).....1
I. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.....1
II. ການອະນຸຍາດສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ເພື່ອຄັດເລືອກເຄື່ອງຈັກ ແລະ ວິທີການປຸງແຕ່ງແຮ່ທາດ ຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ - ເຕັກນິກ ແລະ ສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ເພື່ອປັບປຸງເຕັກນິກການປຸງແຕ່ງແຮ່ທາດ, ຕໍ່ເຕີ່ມໂຮງງານປຸງແຕ່ງແຮ່ທາດ ຫຼື ຂະຫຍາຍກຳລັງການຜະລິດ ໃນໄລຍະດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.....5
ພາກທີ II ຂັ້ນຕອນການພັດທະນາບໍ່ແຮ່.....8
I. ຂັ້ນຕອນການສະເໜີ ແລະ ພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະ ກິດ-ເຕັກນິກ.....8
II. ຂັ້ນຕອນການເຜີຍແຜ່ເນື້ອໃນສັນຍາສຳປະທານພັດທະນາບໍ່ແຮ່ ແລະ ປັກຫຼັກໝາຍເຂດສຳປະທານບໍ່ແຮ່. 10
III. ຂັ້ນຕອນການສະເໜີ ແລະ ພິຈາລະນາ ຂໍ້ຕົກລົງ ແລະ ໃບອະນຸຍາດຂຸດຄົ້ນ ແລະ ດຳເນີນໂຮງງານປຸງແຕ່ງແຮ່ທາດ..... 13
IV. ການພິຈາລະນາ ແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ..... 16
V. ການພິຈາລະນາແຜນການປຸງແຕ່ງແຮ່ທາດ..... 18
VI. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາແຜນການຈຳໜ່າຍ ຜະລິດຕະພັນແຮ່ທາດ. 21
VII. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາໜັງສືແຈ້ງ ຈຳໜ່າຍແຮ່ທາດ..... 23
VIII. ແຜນນຳເຂົ້າປະຈຳປີ (Master List)..... 26
IX. ການສົ່ງຕົວຢ່າງແຮ່ທາດໄປວິໄຈ 29
X. ການພິຈາລະນາແຜນການອອກແບບອ່າງຫາງແຮ່..... 31
XI. ຂັ້ນຕອນການສະເໜີ ແລະ ພິຈາລະນາ ການຮັບຮອງແຜນປິດບໍ່..... 33
XII. ຂັ້ນຕອນການສະເໜີ ແລະ ພິຈາລະນາ ການສົ່ງເນື້ອທີ່ຄືນ..... 36
ພາກທີ III:..... 41

ຄວາມຮັບຜິດຊອບຂອງກົມຄຸ້ມຄອງບໍ່ແຮ່, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ແລະ ບໍລິສັດ 41
I. ຄວາມຮັບຜິດຊອບຂອງກົມຄຸ້ມຄອງບໍ່ແຮ່. 41
II. ຄວາມຮັບຜິດຊອບຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ. 41
III. ຄວາມຮັບຜິດຊອບຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ. 42
IV. ຄວາມຮັບຜິດຊອບຂອງບໍລິສັດ. 43
ໝວດທີ II ນິຕິກຳທີ່ກ່ຽວຂ້ອງ 44
ໝວດທີ III ອະທິບາຍຄຳສັບ ແລະ ຄຳຫຍໍ້: 45
ລາຍຊື່ຄະນະຮັບຜິດຊອບສ້າງຄູ່ມືແນະນຳ 46
ຄະນະຊີ້ນຳ 46
ຄະນະເນື້ອໃນ 46
ຄະນະຮຽບຮຽງ 46

ບົດນຳ

ໂດຍອີງໃສ່ຂັ້ນຕອນໃນການພິຈາລະນາອະນຸຍາດ ແລະ ການຄຸ້ມຄອງວຽກງານການລົງທຶນດ້ານບໍ່ແຮ່ (ນັບແຕ່ໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈົນຮອດໄລຍະປິດບໍ່ແຮ່, ໝາຍວ່າບໍ່ລວມເອົາໄລຍະສະເໜີສຳປະທານເນື້ອທີ່ເພື່ອການຊອກຄົ້ນ ແລະ ສຳຫລວດ ລວມທັງໄລຍະດຳເນີນວຽກງານຊອກຄົ້ນ ແລະ ສຳຫລວດ) ມີຂັ້ນຕອນທີ່ສະຫລັບສັບຊ້ອນ ແລະ ມີຫລາຍພາກສ່ວນຄຸ້ມຄອງ. ດັ່ງນັ້ນ, ເພື່ອໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ເພື່ອໃຫ້ມີຄວາມໂປ່ງໃສ ແລະ ເພື່ອໃຫ້ສັງຄົມໄດ້ຮັບຊາບ-ເຂົ້າໃຈ ກ່ຽວກັບ ຂັ້ນຕອນການອະນຸຍາດ ແລະ ການຄຸ້ມຄອງ ທີ່ຕິດພັນກັບແຕ່ລະພາກສ່ວນ. ການນຳກະຊວງພະລັງງານ ແລະ ບໍ່ແຮ່ ຈຶ່ງໄດ້ມອບໝາຍ ໃຫ້ ກົມຄຸ້ມຄອງບໍ່ແຮ່ ຄົ້ນຄວ້າ ຄຸ່ມືແນະນຳ ຂັ້ນຕອນ ການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ສະບັບນີ້ຂຶ້ນ ເພື່ອເຜີຍແຜ່ໃຫ້ ພະນັກງານພາກລັດ, ຜູ້ລົງທຶນ ແລະ ສັງຄົມ ໄດ້ເຂົ້າໃຈຂັ້ນຕອນການພິຈາລະນາອະນຸຍາດ ແລະ ການຄຸ້ມຄອງວຽກງານການລົງທຶນດ້ານບໍ່ແຮ່ ພ້ອມທັງໄດ້ນຳໄປໃຊ້ເປັນຄຸ່ມືໃນການປະຕິບັດວຽກງານຂອງຕົນ.

ໃນປະຈຸບັນນີ້ ວຽກງານການລົງທຶນດ້ານບໍ່ແຮ່ ມີທັງດຳເນີນໃນຮູບແບບປົກກະຕິທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ ແລະ ດຳເນີນໄປຕາມນະໂຍບາຍຮູບແບບທົດລອງການຂຸດຄົ້ນ ແລະ ສິ່ງອອກແຮ່ທາດ ຂອງລັດຖະບານ ດ້ວຍເຫດນັ້ນ ຄຸ່ມືແນະນຳນີ້ ຈຶ່ງໄດ້ແບ່ງອອກເປັນ 3 ເຫລັ້ມ ຄື:

1. ***<u>ເຫລັ້ມທີ I</u>***: ຄຸ່ມືແນະນຳ ຂັ້ນຕອນ ການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ສຳລັບ ໂຄງການທີ່ມີເຂດສຳປະທານບໍ່ແຮ່ ເປັນ ຂອງຕົນເອງ ທີ່ດຳເນີນຕາມກົດໝາຍ.
2. ***<u>ເຫລັ້ມທີ II</u>*** : ຄຸ່ມືແນະນຳ ຂັ້ນຕອນ ການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ສຳລັບ ໂຄງການທີ່ດຳເນີນຕາມຮູບແບບທົດລອງ.
3. ***<u>ເຫລັ້ມທີ III</u>*** : ຄຸ່ມືແນະນຳ ຂັ້ນຕອນ ການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ສຳລັບ ໂຄງການທີ່ບໍ່ມີເຂດສຳປະທານບໍ່ແຮ່ ເປັນ ຂອງຕົນເອງ ທີ່ດຳເນີນຕາມກົດໝາຍ.

ຄຸ່ມືແນະນຳທັງ 3 ເຫລັ້ມນີ້ ໃນເວລາຈັດຕັ້ງປະຕິບັດຕົວຈິງອາດໄດ້ມີການປັບປຸງໄປເປັນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບ ແນວທາງ ແລະ ນະໂຍບາຍ ຂອງ ລັດຖະບານວາງອອກ ພ້ອມທັງໃຫ້ສອດຄ່ອງກັບ ການປັບປຸງ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

ກົມຄຸ້ມຄອງບໍ່ແຮ່ ຫວັງເປັນຢ່າງຍິ່ງວ່າ ຄຸ່ມືແນະນຳທັງ 3 ເຫລັ້ມນີ້ ຈະຊ່ວຍໃຫ້ ພະນັກງານພາກລັດ, ຜູ້ລົງທຶນ ແລະ ສັງຄົມ ໄດ້ເຂົ້າໃຈ ແລະ ນຳໄປໝຸນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຂອງ ຕົນຢ່າງມີປະສິດທິຜົນ.

ນະຄອນຫລວງວຽງຈັນ, ວັນທີ 30 ທັນວາ 2021.

ຫົວໜ້າກົມຄຸ້ມຄອງບໍ່ແຮ່;

ສຸວັນສັກ ສີສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 755 /ພບ

ນະຄອນຫຼວງວຽງຈັນ, ວັນທີ 21 . 4 . 2022

ຂໍ້ຕົກລົງ
ວ່າດ້ວຍການປະກາດໃຊ້ ຄູ່ມືແນະນຳກ່ຽວກັບຂັ້ນຕອນການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 03/11/2017.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 3404 /ພບ.ກຄຮ3, ລົງວັນທີ 28 ທັນວາ 2021.

ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

ມາດຕາ 1: ເຫັນດີໃຫ້ນຳໃຊ້ຄູ່ມືແນະນຳກ່ຽວກັບຂັ້ນຕອນການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ທີ່ ປະກອບດ້ວຍ 3 ເຫຼັ້ມ ຄື: ເຫຼັ້ມທີ I "ໂຄງການທີ່ມີເຂດສຳປະທານບໍ່ແຮ່ເປັນຂອງຕົນເອງທີ່ດຳເນີນຕາມກົດໝາຍ", ເຫຼັ້ມທີ II "ໂຄງການທີ່ດຳເນີນຮູບແບບທົດລອງ" ແລະ ເຫຼັ້ມທີ III "ໂຄງການທີ່ບໍ່ມີເຂດສຳປະທານເປັນຂອງຕົນເອງ ທີ່ດຳເນີນຕາມກົດໝາຍ".

ມາດຕາ 2: ຄູ່ມືແນະນຳກ່ຽວກັບຂັ້ນຕອນການອະນຸຍາດ ແລະ ການຄຸ້ມຄອງວຽກງານບໍ່ແຮ່ ຈະມີການປ່ຽນແປງໄປຕາມທິດທາງ ຫຼື ນະໂຍບາຍຂອງລັດຖະບານວາງອອກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

ມາດຕາ 3: ມອບໃຫ້ກົມຄຸ້ມຄອງບໍ່ແຮ່ ແລະ ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຈັດສັນງົບປະມານ ເພື່ອນຳໃຊ້ເຂົ້າໃນການຈັດພິມ ແລະ ເຜີຍແຜ່ຄູ່ມືດັ່ງກ່າວຕາມຄວາມເໝາະສົມ.

ມາດຕາ 4: ມອບໃຫ້ກົມຄຸ້ມຄອງບໍ່ແຮ່ ເປັນເຈົ້າການແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ທັງສູນກາງ ແລະ ທ້ອງຖິ່ນ ພ້ອມດ້ວຍບັນດາບໍລິສັດລົງທຶນດ້ານບໍ່ແຮ່ ເພື່ອຮັບຊາບ ແລະ ປະຕິບັດຕາມຄູ່ມືແນະນຳດັ່ງກ່າວ ຢ່າງມີຄວາມເປັນເອກະພາບກັນ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການ ຫຼື ຄຳສັ່ງປ່ຽນແທນ.

ລັດຖະມົນຕີ

ປອ. ດາວວົງ ພອນແກ້ວ

ສຳເນົາ-ບ່ອນສົ່ງ:
- ກົມຄຸ້ມຄອງບໍ່ແຮ່ 1 ສະບັບ;
- ຫ້ອງການກະຊວງ ພບ 1 ສະບັບ;
- ພະແນກ ພບ ແຂວງ/ນຄ 1 ສະບັບ;
- ເກັບມ້ຽນ 1 ສະບັບ.

ຂັ້ນຕອນການລົງທຶນທຸລະກິດກ່ຽວກັບແຮ່ທາດ

1. ຂັ້ນຕອນການລົງທຶນ (ໂຄງການທີ່ມີເຂດສຳປະທານບໍ່ແຮ່ເປັນຂອງຕົນເອງ ທີ່ດຳເນີນຕາມກົດໝາຍ).



ໝວດທີ 1:
ກົດຈະການກ່ຽວກັບແຮ່ທາດ (ໂຄງການມີເຂດສຳປະທານບໍ່ແຮ່ເປັນຂອງຕົນເອງ ທີ່ດຳເນີນຕາມກົດໝາຍ)

ພາກທີ I:
ຂັ້ນຕອນກ່ອນກ້າວເຂົ້າສູ່ການພັດທະນາບໍ່ແຮ່ (ກ່ອນເຊັນສັນຍາສຳປະທານພັດທະນາບໍ່ແຮ່)

I. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາບົດສຶກສາ ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ພາຍຫຼັງ ທີ່ຂາອອກ-ຂາເຂົ້າ ກົມຄຸ້ມຄອງບໍ່ແຮ່ ໄດ້ຮັບເອກະສານຈາກບໍລິສັດ. ກົມຄຸ້ມຄອງບໍ່ແຮ່ ຈະໄດ້ກວດກາໂຄງສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການປະກອບເອກະສານທີ່ກ່ຽວຂ້ອງ ໃຫ້ຄົບຖ້ວນ, ໃນກໍລະນີບໍ່ຄົບຖ້ວນ ກົມຄຸ້ມຄອງບໍ່ແຮ່ ຈະແຈ້ງຕອບບໍລິສັດ ພາຍໃນ 5 ວັນ ລັດຖະການ (ເປັນລາຍລັກອັກສອນ) ເພື່ອໃຫ້ບໍລິສັດ ໄດ້ນຳໄປປະກອບໃຫ້ຄົບຖ້ວນ ຕາມລະບຽບ ແລະ ເງື່ອນໄຂທີ່ກຳນົດໄວ້ໃຫ້ສຳເລັດ ພາຍໃນ 30 ວັນລັດຖະການ, ຖ້າຫາກເກີນ 30 ວັນ ຖືວ່າບໍລິສັດບໍ່ມີຈຸດປະສົງຈະກ້າວເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ໃນກໍລະນີຂໍ້ມູນເອກະສານຄົບຖ້ວນຖືກຕ້ອງແລ້ວ ກຄຮ ຈະໄດ້ຂໍຄຳເຫັນ ຈາກ 4 ພາກສ່ວນ (ອົງການປົກຄອງແຂວງ/ນະຄອນຫຼວງ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງປ້ອງກັນປະເທດ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ພ້ອມທັງຈະນຳສະເໜີ ລມຕ ພບ ອະນຸມັດຂໍ້ຕົກລົງວ່າດ້ວຍການກ້າວເຂົ້າສູ່ຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຕາມອາຍຸຂອງສັນຍາຊອກຄົ້ນ-ສຳຫຼວດທີ່ຍັງເຫຼືອ, ແຕ່ບໍ່ເກີນອາຍຸທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ (1 ປີ).
- ພາຍຫຼັງທີ່ ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ອອກຂໍ້ຕົກລົງແລ້ວ ກົມຄຸ້ມຄອງບໍ່ແຮ່ ຈະໃຊ້ເວລາໃນການຄົ້ນຄວ້າບົດຕ່າງໆ ພາຍໃນ 45 ວັນລັດຖະການ ແລະ ຈັດກອງປະຊຸມເຕັກນິກ ໂດຍແມ່ນບໍລິສັດເປັນຜູ້ນຳສະເໜີ ແລະ ອະທິບາຍ.

- ➢ ພາຍຫຼັງຈັດກອງປະຊຸມເຕັກນິກ ບໍລິສັດຕ້ອງປັບປຸງບົດດັ່ງກ່າວໃຫ້ສຳເລັດ ພາຍໃນ 60 ວັນ (ກໍລະນີມີການປັບປຸງ) ແລະ ສົ່ງບົດທີ່ປັບປຸງແລ້ວໃຫ້ ກຄຮ ຄົ້ນຄວ້າ.
- ➢ ກົມຄຸ້ມຄອງບໍ່ແຮ່ ຈະໃຊ້ເວລາ 45 ວັນ ໃນການຄົ້ນຄວ້າບົດທີ່ບໍລິສັດໄດ້ປັບປຸງຕາມກອງປະຊຸມເຕັກນິກ ແນະນຳນັ້ນ. ໃນກໍລະນີ ກົມຄຸ້ມຄອງບໍ່ແຮ່ ເຫັນວ່າຂໍ້ມູນຄົບຖ້ວນແລ້ວ ແມ່ນຈະໄດ້ຈັດກອງປະຊຸມເປີດກວ້າງ ທີ່ມີພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມດ້ວຍ ຄກສ ເຂົ້າຮ່ວມ ມີຄຳເຫັນ.
- ➢ ພາຍຫຼັງກອງປະຊຸມເປີດກວ້າງ ບໍລິສັດຕ້ອງປັບປຸງບົດໃຫ້ສຳເລັດພາຍໃນ 45 ວັນ (ກໍລະນີມີການປັບປຸງ) ແລະ ສົ່ງໃຫ້ ກົມຄຸ້ມຄອງບໍ່ແຮ່ ຄົ້ນຄວ້າ. ພາຍຫຼັງໄດ້ຮັບບົດທີ່ປັບປຸງນັ້ນ ກົມຄຸ້ມຄອງບໍ່ແຮ່ ຈະຄົ້ນຄວ້າ ພາຍໃນ 15 ວັນ ແລະ ແຈ້ງໃຫ້ບໍລິສັດປັບປຸງບົດຕື່ມ (ກໍລະນີໄດ້ປັບປຸງ), ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ຈະຮັບຮອງແຜນການເຕັກນິກຕ່າງໆ ເພື່ອສົ່ງໃຫ້ຂະແໜງສິ່ງແວດລ້ອມໃນການປະເມີນບົດ ESIA ແລະ EMMP.
- ➢ ພາຍຫຼັງບໍລິສັດສຳເລັດບົດ ESIA ແລະ ໄດ້ຮັບໃບຢັ້ງຢືນສິ່ງແວດລ້ອມ ພ້ອມດ້ວຍໄດ້ຮັບຜົນການປະເມີນຄ່າຫັນປ່ຽນທີ່ດິນປ່າໄມ້ ແລະ ຜົນທະອື່ນທີ່ກ່ຽວຂ້ອງ (ຖ້າມີ) ບໍລິສັດຕ້ອງປັບປຸງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ດັ່ງກ່າວ ໂດຍເພີ່ມຄ່າໃຊ້ຈ່າຍ ຫຼື ຜົນທະດ້ານການເງິນນັ້ນເຂົ້າ ແລ້ວສົ່ງມາຍັງ ກົມຄຸ້ມຄອງບໍ່ແຮ່ ເພື່ອຄົ້ນຄວ້າ ແລະ ລາຍງານຜົນການສຶກສາບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໄປຍັງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອສົ່ງຕໍ່ໄປຍັງ ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາຕາມຂັ້ນຕອນ ແລະ ລະບຽບການ.
- ➢ ກະຊວງແຜນການ ແລະ ການລົງທຶນ ຈະຈັດກອງປະຊຸມຂັ້ນວິຊາການ ເພື່ອກະກຽມຂໍ້ມູນນຳສະເໜີຕໍ່ກອງປະຊຸມ ຄລທ.ສ ໃນກໍລະນີຂໍ້ມູນຄົບຖ້ວນ ໂຄງການດັ່ງກ່າວຈະຖືກນຳໄປພິຈາລະນາໃນກອງປະຊຸມ ຄລທ.ສ. ແຕ່ຖ້າຫາກວ່າຂໍ້ມູນບໍ່ຄົບຖ້ວນ ແມ່ນຈະໄດ້ລໍຖ້າຂໍ້ມູນທີ່ບໍ່ພຽງພໍນັ້ນກ່ອນ.

- ▪ ກໍລະນີ ກອງປະຊຸມ ຄລທ.ສ ເຫັນດີ: ກະຊວງແຜນການ ແລະ ການລົງທຶນ ຈະລາຍງານຫາຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອພິຈາລະນາອະນຸມັດໃຫ້ເຈລະຈາສັນຍາສຳປະທານພັດທະນາບໍ່ແຮ່. ພາຍຫຼັງເຈລະຈາຮ່າງສັນຍາແລ້ວ ກະຊວງແຜນການ ແລະ ການລົງທຶນ ຈະລາຍງານຫາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອໃຫ້ ທ່ານ ນາຍົກລັດຖະມົນຕີ ພິຈາລະນາອະນຸມັດໃຫ້ເຊັນສັນຍາສຳປະທານພັດທະນາບໍ່ແຮ່.
- ▪ ກໍລະນີ ກອງປະຊຸມ ຄລທ.ສ ບໍ່ເຫັນດີ: ກະຊວງແຜນການ ແລະ ການລົງທຶນ ຈະແຈ້ງຕອບບໍລິສັດເປັນລາຍລັກອັກສອນຕາມຜົນຂອງກອງປະຊຸມ.
- ▪ ກໍລະນີ ໂຄງການໄດ້ມີການຫັນປ່ຽນທີ່ດິນປ່າໄມ້ ຫຼື ໂຄງການຂະໜາດໃຫຍ່ ພາຍຫຼັງຜ່ານກອງປະຊຸມ ຄລທ.ສ ແລ້ວ ກະຊວງແຜນການ ແລະ ການລົງທຶນ ຈະລາຍງານຫາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈະນຳສະເໜີໄປຍັງສະພາແຫ່ງຊາດ ເພື່ອພິຈາລະນາ.
- ▪ ກໍລະນີ ສະພາແຫ່ງຊາດ ເຫັນດີ: ສະພາແຫ່ງຊາດ ຈະອອກມະຕິ (ເຫັນດີ) ຂອງຄະນະປະຈຳສະພາແຫ່ງຊາດ ສົ່ງຫາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອພິຈາລະນາຕາມຂັ້ນຕອນຂອງລະບຽບກົດໝາຍ. ຈາກນັ້ນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈະອອກໃບມອບສິດໃຫ້ ກະຊວງແຜນການ ແລະ ການລົງທຶນ ເພື່ອເຈລະຈາສັນຍາສຳປະທານພັດທະນາບໍ່ແຮ່. ພາຍຫຼັງເຈລະນາຮ່າງສັນຍາແລ້ວ ກະຊວງແຜນການ ແລະ ການລົງທຶນ ຈະລາຍງານຫາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອພິຈາລະນາອະນຸມັດໃຫ້ເຊັນສັນຍາສຳປະທານພັດທະນາບໍ່ແຮ່.

- ກໍລະນີ ສະພາແຫ່ງຊາດ ບໍ່ເຫັນດີ: ສະພາແຫ່ງຊາດ ຈະອອກມະຕິ (ບໍ່ເຫັນດີ) ຂອງຄະນະປະຈຳສະພາແຫ່ງຊາດ ສົ່ງຫາ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕາມຜົນຂອງການຕົ່ງຂອງຄະນະປະຈຳສະພາແຫ່ງຊາດ.
- ພາຍຫຼັງເຊັນສັນຍາສຳປະທານພັດທະນາບໍ່ແຮ່ແລ້ວ ໃນກໍລະນີຕ້ອເລກການເຈລະຈາສັນຍາ ຫາກມີການ ປ່ຽນແປງຈາກບົດລາຍງານຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ທີ່ໄດ້ລາຍງານໄປນັ້ນ ບໍລິສັດຕ້ອງໄດ້ປັບປຸງ ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເພື່ອໃຫ້ສອດຄ່ອງຕາມສັນຍາສຳປະທານ ພັດທະນາ ບໍ່ແຮ່ທີ່ໄດ້ເຊັນນັ້ນ ແລ້ວສົ່ງມາຍັງກົມຄຸ້ມຄອງບໍ່ແຮ່ ຄົ້ນຄວ້າ; ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ຈະລາຍງານໄປ ຍັງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອອະນຸມັດຂໍ້ຕົກລົງ ໃຫ້ປະທານ ຄກສ ຮັບຮອງບົດ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ດັ່ງກ່າວ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ.

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ.

- ສັນຍາຊອກຄົ້ນ-ສຳຫຼວດ ເຊັນກັບລັດຖະບານ ທີ່ຍັງມີຜົນສັກສິດ (ຕ້ອງຍັງມີອາຍຸ ຫລາຍກວ່າ 120 ວັນ). ໃນກໍລະນີ ສັນຍາ ຍັງມີອາຍຸ ໜ້ອຍກວ່າ 120 ວັນ ກຄຮ ຈະບໍ່ຮັບພິຈາລະນາ, ບໍລິສັດ ຕ້ອງໄດ້ ຂໍຕໍ່ສັນຍາຈາກກະຊວງແຜນການ ແລະ ການລົງທຶນ ກ່ອນ.
- ຕ້ອງມີໃບຢັ້ງຢືນການປະຕິບັດພັນທະທາງດ້ານການເງິນຄົບຖ້ວນ (ໃນກໍລະນີບໍ່ປະຕິບັດພັນທະທາງດ້ານ ການເງິນຄົບຖ້ວນ ແມ່ນຈະບໍ່ໄດ້ຮັບການພິຈາລະນາ ໃຫ້ເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານ ເສດຖະກິດ-ເຕັກນິກ).
- ບົດລາຍງານການສຳຫຼວດ ແລະ ປະລິມານສະສົມແຮ່ທາດ ທີ່ຖືກຮັບຮອງຈາກກົມທໍລະນີສາດ ແລະ ແຮ່ທາດ ຫຼື ຄຕຮ.
- ແຜນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເພື່ອກຳນົດໜ້າວຽກທີ່ຕ້ອງໄດ້ສຶກສາ, ຄົ້ນຄວ້າ, ວິເຄາະວິໄຈ (ທາງດ້ານເຕັກນິກ-ເສດຖະກິດ), ສຶກສານະໂຍບາຍຂອງລັດຖະບານ ແລະ ອື່ນໆ (ຕາມໂຄງຮ່າງແນະນຳ ຢູ່ໜ້າ.....).
- ໃບສະເໜີຂໍເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ (ຕາມແບບຟອມ ຢູ່ໜ້າທີ...).
- ບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ປະກອບມີ:
  - ບົດແຜນການຂຸດຄົ້ນບໍ່ແຮ່.
  - ບົດແຜນການປຸງແຕ່ງແຮ່ທາດ.
  - ບົດອອກແບບອ່າງຫາງແຮ່.
  - ບົດແຜນການປິດບໍ່ແຮ່.
  - ບົດວິເຄາະທາງດ້ານການເງິນ.

    (ໂຄງຮ່າງຂອງແຕ່ລະບົດ ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ.....)
- ບໍລິສັດຕ້ອງແຕ່ງຕັ້ງຄະນະວິຊາການ ເພື່ອລາຍງານຕໍ່ກອງປະຊຸມເຕັກນິກ ແລະ ກອງປະຊຸມເປີດກວ້າງ.
- ວິຊາການທີ່ຖືກແຕ່ງຕັ້ງຕ້ອງເປັນຜູ້ທີ່ມີວິຊາສະເພາະດ້ານທໍລະນີສາດ ຫຼື ບໍ່ແຮ່, ລະດັບປະລິນຍາໂທຂຶ້ນໄປ, ມີປະສົບປະການຢ່າງໜ້ອຍ 5 ປີ ກ່ຽວກັບວຽກງານດັ່ງກ່າວ ພ້ອມທັງເປັນຜູ້ຄົ້ນຄວ້າ ແລະ ສ້າງບົດ ດັ່ງກ່າວ.
- ບໍລິສັດຕ້ອງເປັນຜູ້ຮັບຜິດຊອບໜ້າວຽກຢູ່ພາກສະໜາມ.

- ບໍລິສັດຕ້ອງຮັບຜິດຊອບທຸກຂໍ້ມູນທີ່ນຳມາສະເໜີໃນການສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ (ຂໍ້ມູນທາງດ້ານເຕັກນິກ ແລະ ວິທີການຄິດໄລ່ທາງດ້ານການເງິນ).

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່.

- ຮັບເອກະສານບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ພິຈາລະນາອະນຸມັດອອກຂໍ້ຕົກລົງກ້າວເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ
- ຄົ້ນຄວ້າພິຈາລະນາຕາມຂັ້ນຕອນເຕັກນິກ ແລະ ລະບຽບກົດໝາຍ.
- ລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫາ ລມຕ ພບ ແລະ ກະຊວງ ຜທ.
- ລົງກວດກາພາກສະໜາມກ່ຽວກັບໜ້າວຽກທີ່ໄດ້ກຳນົດໃນບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ນຳສະເໜີທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອອະນຸມັດຮັບຮອງບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະແນກພະລັງງານ ແລະ ບໍ່ແຮ່ ເມືອງ.

- ປະກອບຄຳເຫັນຕໍ່ການສະເໜີກ່ຽວກັບເນື້ອທີ່ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ປະກອບຄຳເຫັນຕໍ່ຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກະຊວງທີ່ກ່ຽວຂ້ອງ.

- ກະຊວງກະສິກຳ ແລະ ປ່າໄມ້ (ຫັນປ່ຽນປ່າ) ເພື່ອຢັ້ງຢືນຜົນກະທົບຕໍ່ເນື້ອທີ່ສາມປະເພດປ່າໄມ້.
- ກະຊວງປ້ອງກັນປະເທດ (ປ່າປ້ອງກັນ) ເພື່ອຢັ້ງຢືນຜົນກະທົບຕໍ່ປ່າປ້ອງກັນ, ເຂດຍຸດທະສາດທາງການທະຫານ ແລະ ເຂດອື່ນໆຕາມສິດ ແລະ ໜ້າທີ່ຂອງກະຊວງ ປທ.
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ສິ່ງແວດລ້ອມ) ເພື່ອຢັ້ງຢືນຜົນການສຶກສາຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງໂຄງການ.
- ກະຊວງແຜນການ ແລະ ການລົງທຶນ (ສັນຍາ) ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳເອົາຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຜົນການປະເມີນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ສະເໜີຕໍ່ຄະນະກຳມະການ ຄລທ.ສ.
- ການປະກອບຄຳເຫັນຕໍ່ການສະເໜີກ່ຽວກັບເນື້ອທີ່ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ການຮັບຮອງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງຄະນະກຳມະການ ຄກສ.

II. ການອະນຸຍາດສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ເພື່ອຄັດເລືອກເຄື່ອງຈັກ ແລະ ວິທີການປຸງແຕ່ງແຮ່ທາດ ຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ - ເຕັກນິກ ແລະ ສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ເພື່ອປັບປຸງເຕັກນິກການປຸງແຕ່ງແຮ່ທາດ, ຕໍ່ເຕີມໂຮງງານປຸງແຕ່ງແຮ່ທາດ ຫຼື ຂະຫຍາຍກຳລັງການຜະລິດ ໃນໄລຍະດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ



- ບໍລິສັດ ຕ້ອງປະກອບເອກະສານໃຫ້ຄົບຖ້ວນສະເໜີຫາ ກົມຄຸ້ມຄອງບໍ່ແຮ່ ຊຶ່ງເອກະສານປະກອບມີດັ່ງນີ້:
  - ໃບສະເໜີຂໍສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ຢູ່ພາຍໃນ ຫຼື ຕ່າງປະເທດ.
  - ໃບຢັ້ງຢືນ/ຂໍ້ຕົກລົງໄລຍະດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ໃບອະນຸຍາດ ຂຸດຄົ້ນແຮ່ທາດ ຂອງກົມຄຸ້ມຄອງບໍ່ແຮ່.
  - ບົດລາຍງານທາງດ້ານວິຊາການ ກ່ຽວກັບ ເຫດຜົນໃນການຂໍສົ່ງຕົວຢ່າງແຮ່ທາດ ໄປທົດລອງເຕັກໂນໂລຊີ (ສຳລັບໄລຍະດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແຕ່ມີຈຸດປະສົງຂໍທົດລອງ ເພື່ອປັບປຸງເຕັກນິກການປຸງແຕ່ງແຮ່ທາດ, ຕໍ່ເຕີມໂຮງງານ ຫຼື ຂະຫຍາຍກຳລັງການຜະລິດ)
  - ແຜນການສົ່ງຕົວຢ່າງ ເພື່ອການທົດລອງເຕັກໂນໂລຊີ ທີ່ໄດ້ລະບຸໄວ້ໃນແຜນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ແຜນການປະຕິບັດວຽກງານ ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ (ສະບັບໂກປີ) ຊຶ່ງ ກົມຄຸ້ມຄອງບໍ່ແຮ່ ໄດ້ຮັບຮອງເອົາແລ້ວ
  - ປະກອບແບບຟອມການອະນຸຍາດສົ່ງຕົວຢ່າງແຮ່ທາດໄປວິໄຈໄປທົດລອງເຕັກໂນໂລຊີ ຢູ່ພາຍໃນ ຫຼື ຕ່າງປະເທດ ຂອງກົມຄຸ້ມຄອງບໍ່ແຮ່.

- ກົມຄຸ້ມຄອງບໍ່ແຮ່ ກວດກາເອກະສານ ຫາກມີຄວາມຖືກຕ້ອງ ແລະ ຄົບຖ້ວນໝົດແລ້ວ ແມ່ນຈະສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ແລະ ບໍລິສັດ ລົງກວດກາ ແລະ ເກັບຕົວຢ່າງ (ກຳນົດເວລາໃນການລົງກວດກາ ແລະ ເກັບຕົວຢ່າງແມ່ນຂຶ້ນກັບສະພາບຄວາມຍາກ ແລະ ງ່າຍ ເວລາຈັດຕັ້ງປະຕິບັດວຽກຕົວຈິງ).
- ພາຍຫຼັງມີຜົນວິໄຈຫາຄຸນະພາບ ກົມຄຸ້ມຄອງບໍ່ແຮ່ ຈະຢັ້ງຢືນຜົນວິໄຈ ແລະ ຄິດໄລ່ປະລິມານ ສົ່ງອອກ ມອບໃຫ້ກະຊວງການເງິນ ເປັນຜູ້ຄິດໄລ່ ແລະ ເກັບຄ່າຊັບພະຍາກອນ ຕາມລະບຽບການຂອງກະຊວງການເງິນ ກ່ອນການສົ່ງຕົວຢ່າງໄປວິໄຈ.
- ຖ້າໄດ້ຮັບການຢັ້ງຢືນການຈ່າຍຄ່າຊັບພະຍາກອນແຮ່ ຂອງຈຳນວນຕົວຢ່າງທີ່ຈະສົ່ງອອກ ຈາກກະຊວງການເງິນແລ້ວ ກົມຄຸ້ມຄອງບໍ່ແຮ່ ຈະເຮັດໃບອະນຸຍາດ ສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີໃຫ້ບໍລິສັດ ພາຍໃນ 2 ວັນລັດຖະການ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ບໍລິສັດ ຕ້ອງມີໃບຢັ້ງຢືນ ຄວາມຕ້ອງການທາງດ້ານປະລິມານ ແລະ ກຳນົດເວລາໃນການທົດລອງ ຈາກ ໂຮງຮຽນ, ບໍລິສັດ ຫຼື ສະຖາບັນ ທີ່ຈະສົ່ງຕົວຢ່າງໄປວິໄຈທາງດ້ານເຕັກໂນໂລຊີ.
- ປະກອບເອກະສານໃຫ້ຄົບຖ້ວນຕາມແບບຟອມ ແລະ ຄຳແນະນຳຂອງກົມຄຸ້ມຄອງບໍ່ແຮ່.
- ອຳນວຍຄວາມສະດວກໃຫ້ແກ່ພາກສ່ວນລັດເປັນຕົ້ນແມ່ນ ພາກສ່ວນທີ່ກ່ຽວຂ້ອງຂອງກະຊວງພະລັງງານ ແລະ ບໍ່ແຮ່ (ກົມຄຸ້ມຄອງບໍ່ແຮ່), ພາກສ່ວນທີ່ກ່ຽວຂ້ອງຂອງກະຊວງການເງິນ, ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ໃນການສະໜອງຂໍ້ມູນ, ການລົງກວດກາຢູ່ພາກສະໜາມ, ຕະຫຼອດຮອດການປະຕິບັດພັນທະຕ່າງໆ ທີ່ກ່ຽວຂ້ອງກັບການຂໍສົ່ງຕົວຢ່າງແຮ່ ທາດໄປທົດລອງເຕັກໂນໂລຊີ.
- ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການລົງກວດກາ, ວັດແທກ ແລະ ເກັບຕົວຢ່າງ ພ້ອມທັງຄ່າວິໄຈຕົວຢ່າງເພື່ອເປັນຂໍ້ມູນຄິດໄລ່ ຄ່າຊັບພະຍາກອນ ກ່ອນການສົ່ງອອກ.
- ພາຍຫຼັງທົດລອງເຕັກໂນໂລຊີ ແລ້ວ ບໍລິສັດ ຕ້ອງລາຍງານຜົນຂອງການທົດລອງໃຫ້ ກົມຄຸ້ມຄອງບໍ່ແຮ່ ເພື່ອຊາບ ແລະ ເປັນບ່ອນອີງໃນການຄົ້ນຄວ້າ ບົດວິພາກເສດຖະກິດ- ເຕັກນິກ ພາຍໃນ 30 ວັນ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງກົມຄຸ້ມຄອງບໍ່ແຮ່.

- ເປັນເຈົ້າການຫຼັກໃນການຄົ້ນຄວ້າ ເອກະສານການສະເໜີຂໍສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ ຂອງ ບໍລິສັດ.
- ສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ແລະ ບໍລິສັດ ລົງກວດກາດ້ານປະລິມານ, ນ້ຳໜັກ ແລະ ເກັບຕົວຢ່າງແຮ່ທາດ ຢູ່ພາກສະໜາມ.
- ນຳເອົາຕົວຢ່າງແຮ່ທາດ ທີ່ເກັບຢູ່ພາກສະໜາມ ມາເຮັດການວິໄຈຄຸນນະພາບແຮ່ ຢູ່ຕາມສູນ, ສະຖາບັນ ຫຼື ຫ້ອງວິໄຈ ທີ່ມີຄວາມເຊື່ອຖື.
- ນຳເອົາຜົນວິໄຈຄຸນນະພາບແຮ່ ແຈ້ງໃຫ້ ກະຊວງການເງິນ ເພື່ອຄິດໄລ່ ຄ່າພັນທະຕ່າງໆ;
- ຫຼັງຈາກ ຂະບວນການທາງດ້ານເອກະສານຄົບຖ້ວນແລ້ວ ແມ່ນພິຈາລະນາອະນຸຍາດສົ່ງຕົວຢ່າງໄປທົດລອງເຕັກໂນໂລຊີ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ.

- ເຂົ້າຮ່ວມກັບຄະນະວິຊາການຂອງ ກົມຄຸ້ມຄອງບໍ່ແຮ່ ແລະ ບໍລິສັດ ເພື່ອລົງກວດກາປະລິມານ, ນ້ຳໜັກ ແລະ ເກັບຕົວຢ່າງແຮ່ທາດ ຢູ່ພາກສະໜາມ;
- ກວດກາ, ຕິດຕາມ ແລະ ເກັບສະຖິຕິ ດ້ານປະລິມານ ແລະ ນ້ຳໜັກ ໃນເວລາມີການສົ່ງອອກ ຫຼື ເຄື່ອນຍ້າຍຕົວຢ່າງຢູ່ພາກສະໜາມ

D. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງ ບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບ ໃນການຄົ້ນຄວ້າເອກະສານ, ລົງກວດກາ ເກັບຕົວຢ່າງ, ນຳຕົວຢ່າງໄປວິໄຈ ຢູ່ສູນ, ສະຖາບັນ ຫຼື ຫ້ອງທົດລອງ ທີ່ມີຄວາມເຊື່ອຖື. ລາຍງານ ຜົນການທົດລອງໃຫ້ ກະຊວງການເງິນ ຄິດໄລ່ເກັບຄ່າພັນທະທີ່ກ່ຽວຂ້ອງ.
- ກະຊວງການເງິນ ຮັບຜິດຊອບໃນການນຳເອົາຜົນການວິໄຈຕົວຢ່າງ ຈາກ ກົມຄຸ້ມຄອງບໍ່ແຮ່ ໄປຄິດໄລ່ ເພື່ອເກັບຄ່າພັນທະຕ່າງໆ ຂອງຕົວຢ່າງແຮ່ທາດ ທີ່ຈະສົ່ງໄປທົດລອງເຕັກໂນໂລຊີ ແລະ ອຳນວຍຄວາມ ສະດວກເວລານຳເຂົ້າ ແລະ ສົ່ງອອກຕົວຢ່າງດັ່ງກ່າວ.

ພາກທີ II ຂັ້ນຕອນການພັດທະນາບໍ່ແຮ່

I. ຂັ້ນຕອນການສະເໜີ ແລະ ພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ

- ພາຍຫຼັງໄດ້ຮັບຄຳຮ້ອງ ຈາກ ບໍລິສັດ / ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ກົມຄຸ້ມຄອງບໍ່ແຮ່ ຈະກວດກາ ແຜນທີ່ສະເໜີກ້າວເຂົ້າສູ່ຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ຮ່າງໜັງສືສະເໜີຂໍພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ພ້ອມທັງຄັດຕິດ ຮ່າງ ຂໍ້ຕົກລົງ ນຳສະເໜີໄປຍັງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ແກ່ບໍລິສັດ ພາຍໃນ ກຳນົດເວລາ 7 ວັນລັດຖະການ.
- ຄຽງຄູ່ກັບການສະເໜີອອກຂໍ້ຕົກລົງວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ກົມຄຸ້ມຄອງບໍ່ແຮ່ ຕ້ອງອອກໜັງສືນຳສະເໜີ ເພື່ອຂໍຄຳເຫັນດ້ານເນື້ອທີ່ ຈາກ 4 ພາກສ່ວນຄື: ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງປ້ອງກັນປະເທດ ແລະ ອົງການປົກຄອງແຂວງ / ນະຄອນຫຼວງວຽງຈັນ. ຖ້າໃນກໍລະນີຂອບເຂດສຳປະທານດັ່ງກ່າວ ຫາກມີການທັບຊ້ອນກັບເຂດສະຫງວນ ຫຼື ເຂດຫວງຫ້າມ ແລະ ບໍ່ໄດ້ຮັບການເຫັນດີ ຈາກຂະແໜງການທີ່ກ່ຽວຂ້ອງ ກົມຄຸ້ມຄອງບໍ່ແຮ່ ຕ້ອງແຈ້ງໃຫ້ບໍລິສັດ ຮັບຊາບ ແລະ ປະຕິບັດຕາມຄຳເຫັນດັ່ງກ່າວ ໂດຍບໍ່ມີເງື່ອນໄຂ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ປະກອບເອກະສານຄຳຮ້ອງ ຂໍອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຊຶ່ງປະກອບມີດັ່ງນີ້:
  - ໜັງສືສະເໜີ ຂອງ ບໍລິສັດ.
  - ສັນຍາຊອກຄົ້ນ-ສຳຫຼວດ ເຊັນກັບລັດຖະບານ ທີ່ຍັງມີຜົນສັກສິດ (ຕ້ອງຍັງມີອາຍຸ ຫລາຍກວ່າ 120 ວັນ). ໃນກໍລະນີ ສັນຍາ ຍັງມີອາຍຸ ໜ້ອຍກວ່າ 120 ວັນ ກຄຮ ຈະບໍ່ຮັບພິຈາລະນາ, ບໍລິສັດ ຕ້ອງໄດ້ ຂໍຕໍ່ສັນຍາຈາກກະຊວງແຜນການ ແລະ ການລົງທຶນ ກ່ອນ;
  - ຕ້ອງມີໃບຢັ້ງຢືນການປະຕິບັດພັນທະທາງດ້ານການເງິນຄົບຖ້ວນ (ໃນກໍລະນີບໍ່ປະຕິບັດພັນທະທາງດ້ານການເງິນຄົບຖ້ວນ ແມ່ນຈະບໍ່ໄດ້ຮັບການພິຈາລະນາ ໃຫ້ເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ);
  - ບົດລາຍງານການສຳຫຼວດ ແລະ ປະລິມານສະສົມແຮ່ທາດ ທີ່ຖືກຮັບຮອງຈາກ ກທຮ ແລະ ຄຕຮ;
  - ແຜນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເພື່ອກຳນົດໜ້າວຽກທີ່ຕ້ອງໄດ້ສຶກສາ, ຄົ້ນຄວ້າ, ວິເຄາະວິໄຈ (ທາງດ້ານເຕັກນິກ-ເສດຖະກິດ), ສຶກສານະໂຍບາຍຂອງລັດຖະບານ ແລະ ອື່ນໆ.
- ບໍລິສັດຕ້ອງຮັບຜິດຊອບຕໍ່ທຸກຂໍ້ມູນທີ່ນຳມາສະເໜີ.

- ບໍລິສັດ/ຜູ້ລົງທຶນ ຕ້ອງຍື່ນໃບສະເໜີມາຍັງ ກົມຄຸ້ມຄອງບໍ່ແຮ່ ພາຍໃນ 15 ວັນລັດຖະການ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ຮັບຄຳຮ້ອງ ແລະ ເອກະສານອື່ນໆ ຈາກບໍລິສັດ;
- ກວດກາຂອບເຂດເນື້ອທີ່ໆບໍລິສັດສະເໜີຂໍກ້າວເຂົ້າສູ່ຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ;
- ອອກໜັງສືສະເໜີຂໍຄຳເຫັນ ໄປຍັງ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງປ້ອງກັນປະເທດ ແລະ ແຂວງທີ່ໂຄງການຕັ້ງຢູ່ ເພື່ອມີຄຳເຫັນທາງດ້ານເນື້ອທີ່ໆຕິດພັນກັບ ເຂດສະຫງວນ ຫຼື ເຂດຫວງຫ້າມອື່ນໆ ຂອງ ລັດຖະບານ;
- ອອກໜັງສືສະເໜີ ຂໍພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ພ້ອມທັງ ຄັດຕິດ ຮ່າງ ຂໍ້ຕົກລົງດັ່ງກ່າວ ສະເໜີໄປຍັງ ລັດຖະມົນຕີກະຊວງ ພບ ເພື່ອພິຈາລະນາອອກຂໍ້ຕົກລົງ ຕາມຂັ້ນຕອນ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະແນກພະລັງງານ ແລະ ບໍ່ແຮ່ ເມືອງ

- ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ: ກວດກາ ແລະ ຢັ້ງຢືນຄຳເຫັນທາງດ້ານເນື້ອທີ່ໆນອນໃນຄວາມຮັບຜິດຊອບຂອງຕົນ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງກະຊວງທີ່ກ່ຽວຂ້ອງ.

- ກະຊວງກະສິກຳ ແລະ ປ່າໄມ້: ກວດກາ ແລະ ຢັ້ງຢືນຄຳເຫັນທາງດ້ານເນື້ອທີ່ໆນອນໃນຄວາມຮັບຜິດຊອບຂອງຕົນ.
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ກວດກາ ແລະ ຢັ້ງຢືນຄຳເຫັນທາງດ້ານເນື້ອທີ່ໆນອນໃນຄວາມຮັບຜິດຊອບຂອງຕົນ.
- ກະຊວງປ້ອງກັນປະເທດ: ກວດກາ ແລະ ຢັ້ງຢືນຄຳເຫັນທາງດ້ານເນື້ອທີ່ໆນອນໃນຄວາມຮັບຜິດຊອບຂອງຕົນ.

II. ຂັ້ນຕອນການເຜີຍແຜ່ເນື້ອໃນສັນຍາສຳປະທານພັດທະນາບໍ່ແຮ່ ແລະ ປົກຫຼັກໝາຍເຂດສຳປະທານບໍ່ແຮ່.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ



2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ປະກອບເອກະສານສະເໜີຂໍລົງເຜີຍແຜ່ເນື້ອໃນສັນຍາສຳປະທານພັດທະນາບໍ່ແຮ່ ແລະ ປົກຫຼັກໝາຍເຂດສຳປະທານບໍ່ແຮ່, ຊຶ່ງປະກອບມີດັ່ງນີ້:
  - ໃບສະເໜີ ຂອງ ບໍລິສັດ;
  - ສັນຍາສຳປະທານໂຄງການພັດທະນາບໍ່ແຮ່;
  - ໃບອະນຸຍາດລົງທຶນ;
  - ໃບທະບຽນວິສາຫະກິດ;
  - ເອກະສານຢັ້ງຢືນການຈ່າຍຄ່າສຳປະທານ ແລະ ພັນທະຕ່າງໆທາງດ້ານການເງິນ;
  - ແຜນການປະຕິບັດວຽກງານ ການເຜີຍແຜ່ສັນຍາ ແລະ ການປົກຫຼັກໝາຍ.
- ບໍລິສັດຕ້ອງຮັບຜິດຊອບຕໍ່ທຸກຂໍ້ມູນທີ່ນຳມາສະເໜີ.
- ບໍລິສັດ/ຜູ້ລົງທຶນ ຕ້ອງຍື່ນໃບສະເໜີມາຍັງ ກົມຄຸ້ມຄອງບໍ່ແຮ່ ພາຍໃນ 15 ວັນລັດຖະການ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່.

- ຮັບຄຳຮ້ອງ ແລະ ເອກະສານອື່ນໆ ຈາກບໍລິສັດ;
- ຮ່າງໜັງສືສະເໜີໄປຍັງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອຂໍອະນຸມັດຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍ ການແຕ່ງຕັ້ງພະນັກງານລັດຖະກອນ ໄປປະຕິບັດວຽກງານຢູ່ຕ່າງແຂວງ.
- ອອກໜັງສືສະເໜີໄປຍັງ ກົມສົ່ງເສີມການລົງທຶນ (ກະຊວງ ຜທ), ກົມສົ່ງແວດລ້ອມ (ກະຊວງ ຊສ) ແລະ ພະແນກ ພບ ແຂວງ / ນະຄອນຫຼວງວຽງຈັນ ເພື່ອຂໍພະນັກງານເຂົ້າຮ່ວມການເຜີຍແຜ່ສັນຍາ ແລະ ປົກຫຼັກໝາຍ.
- ສົມທົບກັບ ກົມສົ່ງເສີມການລົງທຶນ (ກະຊວງ ຜທ), ກົມສົ່ງແວດລ້ອມ (ກະຊວງ ຊສ), ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ / ນະຄອນຫຼວງວຽງຈັນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ບໍລິສັດ ເພື່ອຈັດກອງປະຊຸມເຜີຍແຜ່ເນື້ອໃນສັນຍາ ຢູ່ແຂວງ / ເມືອງ ທີ່ໂຄງການຕັ້ງຢູ່ ແລະ ເຮັດບົດບັນທຶກກອງປະຊຸມຮ່ວມກັ.
- ສົມທົບກັບ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ / ນະຄອນຫຼວງວຽງຈັນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ບໍລິສັດ ລົງປົກຫຼັກໝາຍເຂດສຳປະທານ ແລະ ເຮັດບົດບັນທຶກພາກສະໜາມຮ່ວມກັນ.
- ລາຍງານຜົນສຳເລັດ ການເຜີຍແຜ່ສັນຍາ ແລະ ປົກຫຼັກໝາຍເຂດສຳປະທານ ໃຫ້ການນຳກະຊວງ ພະລັງງານ ແລະ ບໍ່ແຮ່ ຊາບ ແລະ ມີທິດຊີ້ນຳ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະແນກພະລັງງານ ແລະ ບໍ່ແຮ່ ເມືອງ

- ພົວພັນ ແລະ ປະສານສົມທົບ ກັບ ກົມຄຸ້ມຄອງບໍ່ແຮ່ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ເພື່ອກະກຽມສະຖານທີ່ຈັດກອງປະຊຸມເຜີຍແຜ່ເນື້ອໃນສັນຍາ ຢູ່ແຂວງ / ເມືອງ ທີ່ໂຄງການຕັ້ງຢູ່ ແລະ ເຮັດບົດບັນທຶກກອງປະຊຸມຮ່ວມກັນ.
- ໂຄສະນາ ເຜີຍແຜ ກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບກິດຈະການກ່ຽວກັບບໍ່ແຮ່ຕໍ່ສັງຄົມ.
- ສົມທົບກັບ ກົມຄຸ້ມຄອງບໍ່ແຮ່ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອລົງປົກຫຼັກໝາຍເຂດສຳປະທານພັດທະນາບໍ່ແຮ່ ແລະ ເຮັດບົດບັນທຶກຮ່ວມກັນ.

- ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງ ກະຊວງທີ່ກ່ຽວຂ້ອງ.

- ກະຊວງການເງິນ: ກົມຄຸ້ມຄອງຊັບສິນຂອງລັດ ແຕ່ງຕັ້ງຜູ້ຕາງໜ້າ ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນສັນຍາ.
- ກະຊວງແຜນການ ແລະ ການລົງທຶນ: ກົມສົ່ງເສີມການລົງທຶນ ແຕ່ງຕັ້ງຜູ້ຕາງໜ້າ ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນສັນຍາ.
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ກົມສິ່ງແວດລ້ອມ ແຕ່ງຕັ້ງຜູ້ຕາງໜ້າ ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນສັນຍາ

III. ຂັ້ນຕອນການສະເໜີ ແລະ ພິຈາລະນາ ຂໍ້ຕົກລົງ ແລະ ໃບອະນຸຍາດຂຸດຄົ້ນ ແລະ ດຳເນີນໂຮງງານປຸງແຕ່ງແຮ່ທາດ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ພາຍຫຼັງໄດ້ຮັບຄຳຮ້ອງ ຈາກ ບໍລິສັດ / ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ກົມຄຸ້ມຄອງບໍ່ແຮ່ ຈະຮ່າງ ໜັງສືສະເໜີ ຂໍພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ພ້ອມທັງ ຄັດຕິດ ຮ່າງ ຂໍ້ຕົກລົງດັ່ງກ່າວ ສະເໜີໄປຍັງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາ ພາຍໃນ ກຳນົດເວລາ 10 ວັນລັດຖະການ.
- ໃນກໍລະນີ ການປະກອບເອກະສານຂອງ ຜູ້ລົງທຶນ / ບໍລິສັດ ບໍ່ຄົບຖ້ວນ ແລະ ກົມຄຸ້ມຄອງບໍ່ແຮ່ ບໍ່ສາມາດ ພິຈາລະນາອອກໃບອະນຸຍາດໄດ້. ກົມຄຸ້ມຄອງບໍ່ແຮ່ ຈະອອກໜັງສືແຈ້ງ ພາຍໃນເວລາ 5 ວັນລັດຖະການ ເພື່ອໃຫ້ ຜູ້ລົງທຶນ / ບໍລິສັດ ຊາບ ແລະ ປະກອບເອກະສານຄືນໃໝ່.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ຕາມການສະເໜີຂອງກົມຄຸ້ມຄອງບໍ່ແຮ່, ໂດຍຜ່ານ ຮອງລັດຖະມົນຕີ, ຜູ້ຊີ້ນຳວຽກງານບໍ່ແຮ່.

- ພາຍຫຼັງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ ໃຫ້ແກ່ບໍລິສັດແລ້ວ, ກົມຄຸ້ມຄອງບໍ່ແຮ່ ຈະອະນຸມັດ ໃບອະນຸຍາດຂຸດຄົ້ນບໍ່ແຮ່ ແລະ ໃບ ອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງແຮ່ທາດ ພາຍໃນກຳນົດເວລາ 7 ວັນລັດຖະການ;
- ພາຍຫຼັງ ກົມຄຸ້ມຄອງບໍ່ແຮ່ ເຊັນອະນຸມັດໃບອະນຸຍາດຂຸດຄົ້ນບໍ່ແຮ່ ໃຫ້ບໍລິສັດແລ້ວ, ບໍລິສັດຕ້ອງຊຳລະຄ່າ ທຳນຽມເອກະສານ ຈຳນວນ 600.000 ກີບ ຕໍ່ 1 ໃບ;
- ຜູ້ຖືໃບອະນຸຍາດ / ຜູ້ທີ່ອອກຊື່ໃນໃບອະນຸຍາດ ຕ້ອງມາເຊັນຮັບເອົາໃບອະນຸຍາດດັ່ງກ່າວ ຢູ່ ພະແນກສຳ ປະທານ ແລະ ຄຸ້ມຄອງສັນຍາ ດ້ວຍຕົນເອງ. ໃນກໍລະນີ ໃຫ້ບຸກຄົນອື່ນມາເຊັນຮັບໃບອະນຸຍາດແທນ ຕ້ອງ ມີໃບມອບສິດ ຈາກ ຜູ້ຖືໃບອະນຸຍາດ / ຜູ້ທີ່ອອກຊື່ໃນໃບອະນຸຍາດ.
- ແຜນວາດຂັ້ນຕອນການສະເໜີ ແລະ ພິຈາລະນາ ອອກຂໍ້ຕົກລົງ ແລະ ໃບອະນຸຍາດການຂຸດຄົ້ນ ແລະ ດຳເນີນໂຮງງານປຸງແຕ່ງແຮ່ທາດ (ແບບປົກກະຕິ).

2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ໜັງສືສະເໜີ ຂອງ ບໍລິສັດ (ຕາມແບບຟອມ ຢູ່ໜ້າ.....).
- ສັນຍາສຳປະທານໂຄງການພັດທະນາບໍ່ແຮ່ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ບໍລິສັດ / ຜູ້ລົງທຶນ;
- ໃບອະນຸຍາດລົງທຶນ ທີ່ອະນຸມັດໂດຍ ກະຊວງແຜນການ ແລະ ການລົງທຶນ.
- ໃບທະບຽນວິສາຫະກິດ.
- ໃບຮັບຮອງປົດສິ່ງແວດລ້ອມ.
- ປົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ຄົບຊຸດ ຊຶ່ງປະກອບມີ: ແຜນການ ຂຸດຄົ້ນບໍ່ແຮ່, ແຜນການປຸງແຕ່ງແຮ່ທາດ, ແຜນການຟື້ນຟູ ແລະ ປິດບໍ່ແຮ່ ທີ່ໄດ້ຮັບຮອງໂດຍ ກົມຄຸ້ມຄອງບໍ່ແຮ່.
- ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນຂອງຜູ້ຖືໃບອະນຸຍາດ (ໃຫ້ສອດຄ່ອງກັບໃບອະນຸຍາດລົງທຶນ);
- ຮູບຖ່າຍຂະໜາດ 3x4 ບໍ່ເກີນ 3 ເດືອນ, ຈຳນວນ 3 ໃບ ສຳລັບໃບອະນຸຍາດຂຸດຄົ້ນ 1 ຊຸດ ແລະ ຈຳນວນ 4 ໃບ ສຳລັບໃບອະນຸຍາດປຸງແຕ່ງແຮ່ທາດ 1 ຊຸດ.
- ບໍລິສັດຕ້ອງຮັບຜິດຊອບຕໍ່ທຸກຂໍ້ມູນທີ່ນຳມາສະເໜີ.
- ບໍລິສດ/ຜູ້ລົງທຶນ ຕ້ອງຍື່ນໃບສະເໜີມາຍັງ ກຄຮ ພາຍໃນ 15 ວັນລັດຖະການ.
- ບໍລິສັດຕ້ອງຊຳລະຄ່າທຳນຽມເອກະສານ ຈຳນວນ 600.000 ກີບ ຕໍ່ 1 ໃບ.
- ບໍລິສັດຕ້ອງມາເຊັນຮັບເອົາໃບອະນຸຍາດດັ່ງກ່າວ ຢູ່ ພະແນກສຳປະທານ ແລະ ຄຸ້ມຄອງສັນຍາ ດ້ວຍຕົນເອງ. ໃນກໍລະນີ ໃຫ້ບຸກຄົນອື່ນມາເຊັນຮັບໃບອະນຸຍາດແທນ ຕ້ອງມີໃບມອບສິດ ຈາກ ຜູ້ຖືໃບອະນຸຍາດ / ຜູ້ທີ່ ອອກຊື່ໃນໃບອະນຸຍາດ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ຮັບຄຳຮ້ອງ ແລະ ເອກະສານອື່ນໆ ຈາກບໍລິສັດ;
- ອອກໜັງສືສະເໜີ ຂໍພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ພ້ອມທັງຄັດຕິດຮ່າງ ຂໍ້ຕົກລົງດັ່ງກ່າວ ສະເໜີໄປຍັງ ລັດຖະມົນຕີກະຊວງ ພບ ເພື່ອພິຈາລະນາ;
- ອອກໜັງສືແຈ້ງຕອບບໍລິສັດ ໃນກໍລະນີ ການປະກອບເອກະສານຂອງ ຜູ້ລົງທຶນ / ບໍລິສັດ ບໍ່ຄົບຖ້ວນ ແລະ ກົມຄຸ້ມຄອງບໍ່ແຮ່ ບໍ່ສາມາດພິຈາລະນາອອກໃບອະນຸຍາດໄດ້;
- ອະນຸມັດ ໃບອະນຸຍາດຂຸດຄົ້ນບໍ່ແຮ່ ແລະ ໃບອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງແຮ່ທາດ ໃຫ້ແກ່ ບໍລິສັດ, ໂດຍອີງໃສ່ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງ ພບ ວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະແນກພະລັງງານ ແລະ ບໍ່ແຮ່ ເມືອງ

- ອຳນວຍຄວາມສະດວກ ແລະ ຕິດຕາມກວດກາ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງຂອງ ລມຕ ພບ;
- ເປັນເສນາທິການໂດຍກົງໃຫ້ແກ່ ກະຊວງ ພບ ແລະ ອົງການປົກຄອງແຂວງ ແລະ ເມືອງຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ລະບຸໄວ້ໃນມາດຕາ 84 ຂອງກົດໝາຍ ວ່າດ້ວຍແຮ່ທາດ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງ ກະຊວງທີ່ກ່ຽວຂ້ອງ.

- (ບໍ່ມີ)

IV. ການພິຈາລະນາ ແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ບໍລິສັດ ຕ້ອງຢູ່ໃນໄລຍະສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ມີຂໍ້ຕົກລົງອະນຸຍາດໃຫ້ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈາກກະຊວງພະລັງງານ ແລະ ບໍ່ແຮ່, ມີບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ທີ່ກ່ຽວຂ້ອງ.
- ບໍລິສັດ ສ້າງແຜນການກໍ່ສ້າງ ຕາມແບບຟອມແຜນການກໍ່ສ້າງ ທີ່ຊ້ອນທ້າຍບົດແນະນຳສະບັບນີ້.
- ບໍລິສັດ ສົ່ງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ຫາ ກົມຄຸ້ມຄອງບໍ່ແຮ່ ພິຈາລະນາ.
- ກົມຄຸ້ມຄອງບໍ່ແຮ່ ສົມທົບກັບບໍລິສັດ ຄົ້ນຄວ້າ ແລະ ປັບປຸງໃຫ້ບົດດັ່ງກ່າວມີເນື້ອໃນທີ່ຄົບຖ້ວນສົມບູນ, ຊຶ່ງປະກອບມີບັນດາໜ້າວຽກ: ຄົ້ນຄວ້າບົດ, ແຈ້ງຄຳເຫັນປັບປຸງບົດ, ຈັດກອງປະຊຸມທາງດ້ານເຕັກນິກ ແລະ ສົມທົບກັນປັບປຸງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ.
- ລົງກວດກາສະພາບພື້ນທີ່ຕົວຈິງພາກສະໜາມກ່ອນການພິຈາລະນາຮັບຮອງ.
- ກົມຄຸ້ມຄອງບໍ່ແຮ່ ພິຈາລະນາຮັບຮອງເອົາບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ຢ່າງຊ້າບໍ່ໃຫ້ເກີນ 7 ວັນລັດຖະການ ນັບແຕ່ວັນໄດ້ຮັບບົດແຜນການ ທີ່ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ດຳເນີນວຽກງານໃຫ້ຖືກຕ້ອງ, ສອດຄ່ອງ ຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
- ສ້າງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ໃຫ້ສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ ຕາມການແນະນຳ ແລະ ຮ່າງແບບຟອມຂອງ ກົມຄຸ້ມຄອງບໍ່ແຮ່.
- ປະຕິບັດບັນດາພັນທະຕ່າງໆ ໃນໄລຍະສ້າງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ໃຫ້ຄົບຖ້ວນເປັນປະຈຳ.
- ອຳນວຍຄວາມສະດວກ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນການລົງກວດກາສະພາບພື້ນທີ່ຕົວຈິງຢູ່ພາກສະໜາມ ຂອງພາກສ່ວນທີ່ກ່ຽວຂ້ອງ ຂອງລັດກ່ອນການພິຈາລະນາຮັບຮອງບົດ.
- ປັບປຸງບົດ ຕາມຄຳເຫັນ ແລະ ຄຳແນະນຳ ຂອງ ກົມຄຸ້ມຄອງບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ບົດມີເນື້ອໃນສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ.
- ສຳເນົາບົດທີ່ຜ່ານການຮັບຮອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ທາງສູນກາງ ແລະ ທ້ອງຖິ່ນ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່.

- ກົມຄຸ້ມຄອງບໍ່ແຮ່ ສົມທົບກັບບໍລິສັດ ຄົ້ນຄວ້າ ແລະ ປັບປຸງໃຫ້ບົດດັ່ງກ່າວມີເນື້ອໃນທີ່ຄົບຖ້ວນສົມບູນ, ຊຶ່ງປະກອບມີບັນດາໜ້າວຽກ: ຄົ້ນຄວ້າບົດ, ແຈ້ງຄຳເຫັນປັບປຸງບົດ, ຈັດກອງປະຊຸມທາງດ້ານເຕັກນິກ ແລະ ສົມທົບກັນປັບປຸງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ.
- ລົງກວດກາສະພາບພື້ນທີ່ຕົວຈິງພາກສະໜາມກ່ອນການພິຈາລະນາຮັບຮອງ.
- ກົມຄຸ້ມຄອງບໍ່ແຮ່ ພິຈາລະນາຮັບຮອງເອົາບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ຢ່າງຊ້າບໍ່ໃຫ້ເກີນ 7 ວັນລັດຖະການ ນັບແຕ່ວັນໄດ້ຮັບບົດແຜນການ ທີ່ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະແນກພະລັງງານ ແລະ ບໍ່ແຮ່ ເມືອງ

- ເຂົ້າຮ່ວມກັບ ກົມຄຸ້ມຄອງບໍ່ແຮ່ ສົມທົບກັບບໍລິສັດລົງກວດກາສະພາບພື້ນທີ່ຕົວຈິງຢູ່ພາກສະໜາມ.
- ສຳເນົາ ບົດແຜນການ ສະບັບຮັບຮອງ ແລະ ເຮັດໜ້າທີ່ ຕິດຕາມການດຳເນີນວຽກງານຂອງບໍລິສັດ, ສັງລວມລາຍງານ ການເຄື່ອນໄຫວວຽກງານຂອງ ບໍລິສັດ ເປັນເດືອນ, ງວດ, ແລະ ປີ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບຫຼັກ.

V. ການພິຈາລະນາແຜນການປຸງແຕ່ງແຮ່ທາດ.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ



- ບໍລິສັດ ຕ້ອງມີເອກະສານທາງດ້ານນິຕິກຳຄົບຖ້ວນເປັນຕົ້ນແມ່ນ: ມີບົດລາຍງານຜົນການຊອກຄົ້ນ-ສຳຫຼວດ ທີ່ຜ່ານການຮັບຮອງຈາກກະຊວງພະລັງງານ ແລະ ບໍ່ແຮ່; ມີຂໍ້ຕົກລົງອະນຸຍາດໃຫ້ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈາກກະຊວງພະລັງງານ ແລະ ບໍ່ແຮ່.
- ບໍລິສັດ ສົມທົບກັບກົມຄຸ້ມຄອງບໍ່ແຮ່ ເພື່ອປຶກສາຫາລື ບັນດາກອບໜ້າວຽກ (TOR) ການສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາກແຜນການປຸງແຕ່ງແຮ່ທາດ ຕາມແບບຟອມແຜນການປຸງແຕ່ງແຮ່ທາດ ທີ່ຊ້ອນທ້າຍບົດແນະນຳສະບັບນີ້.
- ບໍລິສັດ ສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາກແຜນການປຸງແຕ່ງແຮ່ທາດ ສຳເລັດ ແລະ ສະເໜີຫາ ກຄຮ ພິຈາລະນາ.
- ກົມຄຸ້ມຄອງບໍ່ແຮ່ ສົມທົບກັບບໍລິສັດ ຄົ້ນຄວ້າ ແລະ ປັບປຸງໃຫ້ບົດດັ່ງກ່າວມີເນື້ອໃນທີ່ຄົບຖ້ວນສົມບູນ, ຊຶ່ງປະກອບມີບັນດາໜ້າວຽກ: ຄົ້ນຄວ້າບົດ, ແຈ້ງຄຳເຫັນປັບປຸງບົດ, ຈັດກອງປະຊຸມທາງດ້ານເຕັກນິກ ແລະ ກອງປະຊຸມເປີດກວ້າງ ເພື່ອຮັບຟັງການລາຍງານແຜນການປຸງແຕ່ງແຮ່ທາດຂອງບໍລິສັດ, ສົມທົບກັນປັບປຸງບົດແຜນການປຸງແຕ່ງແຮ່ທາດ ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ.
- ລົງກວດກາສະພາບພື້ນທີ່ສ້າງຕັ້ງໂຮງງານຕົວຈິງພາກສະໜາມກ່ອນການພິຈາລະນາຮັບຮອງແຜນການປຸງແຕ່ງແຮ່ທາດ.

- ກະຊວງພະລັງງານ ແລະ ບໍ່ແຮ່ ຮັບຮອງເອົາບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາກແຜນການປຸງແຕ່ງແຮ່ທາດ ຢ່າງຊ້າບໍ່ໃຫ້ເກີນ 120 ວັນ ນັບແຕ່ວັນໄດ້ຮັບບົດລາຍງານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ດຳເນີນວຽກງານໃຫ້ຖືກຕ້ອງ, ສອດຄ່ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
- ຂໍຂໍ້ຕົກລົງ ສຶກສາບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈາກກະຊວງພະລັງງານ ແລະ ບໍ່ແຮ່.
- ສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາກແຜນການປຸງແຕ່ງແຮ່ທາດ ໃຫ້ສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ ຕາມການແນະນຳ ແລະ ຮ່າງແບບຟອມຂອງ ກົມຄຸ້ມຄອງບໍ່ແຮ່.
- ປະຕິບັດບັນດາພັນທະຕ່າງໆ ໃນໄລຍະສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ຄົບຖ້ວນເປັນປະຈຳ.
- ອຳນວຍຄວາມສະດວກ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນການລົງກວດກາສະພາບພື້ນທີ່ຕົວຈິງຢູ່ພາກສະໜາມ ຂອງພາກສ່ວນທີ່ກ່ຽວຂ້ອງ ຂອງລັດກ່ອນການພິຈາລະນາຮັບຮອງບົດ.
- ປັບປຸງບົດແຜນການປຸງແຕ່ງແຮ່ທາດ ຕາມຄຳເຫັນ ແລະ ຄຳແນະນຳ ຂອງ ກຄຮ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ບົດມີເນື້ອໃນສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ.
- ສຳເນົາບົດທີ່ຜ່ານການຮັບຮອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ທາງສູນກາງ ແລະ ທ້ອງຖິ່ນ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ປຶກສາຫາລື ຮ່ວມກັບ ບໍລິສັດ ຮ່າງກອບໜ້າວຽກ (TOR) ໃນການສ້າງບົດແຜນການປຸງແຕ່ງແຮ່ທາດໃຫ້ແທດເໝາະກັບປະເພດແຮ່ທາດທີ່ຈະເຮັດການປຸງແຕ່ງແຮ່ທາດ.
- ຄົ້ນຄວ້າ, ສັງລວມ ແລະ ມີຄຳເຫັນໃຫ້ບໍລິສັດ ປັບປຸງບົດແຜນການປຸງແຕ່ງແຮ່ທາດໃຫ້ສອດຄ່ອງຖືກຕ້ອງ ແລະ ຄົບຖ້ວນ.
- ຈັດກອງປະຊຸມຮັບຟັງການລາຍງານແຜນການປຸງແຕ່ງແຮ່ທາດຂອງບໍລິສັດ ແລະ ປຶກສາຫາລື ທາງດ້ານເຕັກນິກ.
- ຈັດກອງປະຊຸມເປີດກວ້າງຮັບຟັງການລາຍງານແຜນການປຸງແຕ່ງແຮ່ທາດຂອງບໍລິສັດ ແລະ ປະກອບຄຳຄິດຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ.
- ສົມທົບກັບບໍລິສັດ ປັບປຸງ ບົດແຜນການປຸງແຕ່ງແຮ່ທາດ ໃຫ້ສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ.
- ສົມທົບກັບ ບໍລິສັດ, ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ລົງກວດກາສະພາບພື້ນທີ່ຕົວຈິງ ຢູ່ພາກສະໜາມ.
- ພິຈາລະນາຮັບຮອງບົດແຜນການປຸງແຕ່ງແຮ່ທາດ ຢ່າງຊ້າບໍ່ໃຫ້ເກີນ 120 ວັນ ນັບແຕ່ວັນໄດ້ຮັບບົດລາຍງານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ.

- ເຂົ້າຮ່ວມກອງປະຊຸມເປີດກວ້າງ ຮັບຟັງການລາຍງານ ຂອງບໍລິສັດ ແລະ ປະກອບຄຳຄິດຄຳເຫັນ ຕໍ່ບົດແຜນການປຸງແຕ່ງແຮ່ທາດຂອງບໍລິສັດ.

- ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງລັດ ສົມທົບກັບ ບໍລິສັດ ລົງກວດກາສະພາບພື້ນທີ່ຕົວຈິງຢູ່ພາກສະໜາມ.
- ສຳເນົາ ບົດແຜນການປຸງແຕ່ງແຮ່ທາດ ສະບັບຮັບຮອງ ແລະ ເຮັດໜ້າທີ່ ຕິດຕາມການດຳເນີນວຽກງານຂອງ ບໍລິສັດ, ສັງລວມລາຍງານ ການເຄື່ອນໄຫວວຽກງານຂອງ ບໍລິສັດ ເປັນເດືອນ, ງວດ, ແລະ ປີ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່: ຮັບຜິດຊອບຫຼັກໃນການຄົ້ນຄວ້າບົດ ແລະ ລົງເລິກວຽກເຕັກນິກການປຸງ ແຕ່ງແຮ່ທາດ;
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ເບິ່ງເບິ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ
- ກະຊວງກະສິກຳ ແລະ ປ່າໄມ້: ເບິ່ງເລື່ອງເນື້ອທີ່ເຂດສ້າງໂຮງງານປຸງແຕ່ງແຮ່ທາດ

VI. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາແຜນການຈຳໜ່າຍ ຜະລິດຕະພັນແຮ່ທາດ.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ບໍລິສັດທີ່ສາມາດສະເໜີແຜນປະຈຳປີ ແລະ ການຈຳໜ່າຍຜະລິດຕະພັນແຮ່ທາດ ຕ້ອງແມ່ນຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບບໍ່ແຮ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງ ພ້ອມທັງປະຕິບັດພັນທະທາງດ້ານການເງິນຢ່າງຄົບຖ້ວນ.
- ແຜນການຈຳໜ່າຍຜະລິດຕະພັນແຮ່ທາດ ແມ່ນສາມາດນຳໃຊ້ໄດ້ 1 ປີ ຫຼື ນຳໃຊ້ໄດ້ຮອດວັນທີ 31 ທັນວາ ຂອງປີທີ່ອະນຸຍາດ (ແຜນດັ່ງກ່າວ ແມ່ນຈະຖືກອະນຸມັດເປັນປີຕໍ່ປີ ຕາມປີປະຕິທິນ).
- ກົມຄຸ້ມຄອງບໍ່ແຮ່ ຈະໃຊ້ເວລາ 1 ວັນລັດຖະການ ກວດກາເອກະສານທີ່ບໍລິສັດປະກອບມາ
- ຮ່າງໜັງສືສະເໜີຫາ ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາອະນຸມັດຂໍ້ຕົກລົງມອບໃຫ້ກົມຄຸ້ມຄອງບໍ່ແຮ່ ຮັບຮອງແຜນການຈຳໜ່າຍ ພາຍໃນ 3 ວັນລັດຖະການ
- ເມື່ອໄດ້ຮັບຂໍ້ຕົກລົງຂອທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ແລ້ວ ກົມຄຸ້ມຄອງບໍ່ແຮ່ ຈະຮັບຮອງແຜນດັ່ງກ່າວ ພາຍໃນ 1 ວັນລັດຖະການ.
- ໃນກໍລະນີບໍລິສັດປະກອບເອກະສານບໍ່ຄົບຖ້ວນ ກົມຄຸ້ມຄອງບໍ່ແຮ່ ຈະເຮັດໜັງສືແຈ້ງຕອບບໍລິສັດເພື່ອປະກອບຂໍ້ມູນຕື່ມ ພາຍໃນ 1 ວັນລັດຖະການ ພາຍຫຼັງໄດ້ຮັບເອກະສານຈາກບໍລິສັດ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ໜັງສືສະເໜີ (ຕາມແບບຟອມ ຢູ່ໜ້າ...).
- ແຜນການຈຳໜ່າຍປະຈຳປີ (ຕາມແບບຟອມ ຢູ່ໜ້າ...).
- ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ເປັນຕົ້ນ: ຄ່າຊັບພະຍາກອນແຮ່ທາດ, ທຶນ ແລະ ກອງທຶນຕາມສັນຍາ, ພາສີ-ກອນ ແລະ ຄ່າທຳນຽມອື່ນໆ.

- ຂໍ້ມູນການຈັດຕັ້ງປະຕິບັດວຽກງານ ເປັນຕົ້ນ: ການຜະລິດ, ການຈຳໜ່າຍ ແລະ ການປະຕິບັດພັນທະທາງ ດ້ານການເງິນ ນັບແຕ່ເລີ່ມໂຄງການເປັນຕົ້ນມາ ໂດຍແຍກເປັນແຕ່ລະປີ.
- ອຳນວຍຄວາມສະດວກໃຫ້ພະນັກງານພາກລັດໃນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ຄົ້ນຄວ້າ ແລະ ນຳສະເໜີ ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອະນຸມັດຂໍ້ຕົກລົງຮັບຮອງ ແຜນການຈຳໜ່າຍຜະລິດຕະພັນແຮ່ທາດປະຈຳປີ.
- ຮັບຮອງແຜນການຈຳໜ່າຍຜະລິດຕະພັນແຮ່ທາດ ພ້ອມທັງສົ່ງແຜນການດັ່ງກ່າວໃຫ້ພາກສ່ວນທີ່ກ່ຽວຂ້ອງ (ກົມພາສີ, ກົມຄຸ້ມຄອງຊັບສິນແຫ່ງລັດ, ກົມສ່ວຍສາອາກອນ, ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ) ເພື່ອຮັບຊາບ ແລະ ຕິດຕາມ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ.

- ບໍ່ມີ

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງ ກະຊວງທີ່ກ່ຽວຂ້ອງ

- ບໍ່ມີ

VII. ຂັ້ນຕອນການສະເໜີ, ການຄົ້ນຄວ້າ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບການພິຈາລະນາ ໜັງສືແຈ້ງຈຳໜ່າຍແຮ່ທາດ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ



- ກ່ອນການຈຳໜ່າຍຜະລິດຕະພັນແຮ່ ແຜນການຈຳໜ່າຍປະຈຳປີຕ້ອງໄດ້ຖືກຮັບຮອງຈາກ ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ (ສຳລັບການຈຳໜ່າຍຄັ້ງທຳອິດ ຂອງປີນັ້ນ). ສຳລັບການຈຳໜ່າຍຄັ້ງຕໍ່ໄປ ບໍລິສັດຕ້ອງໄດ້ປະຕິບັດພັນທະທາງດ້ານການເງິນຄັ້ງຜ່ານມາຄົບຖ້ວນ ແລະ ລາຍງານຕົວເລກທີ່ການຈຳໜ່າຍ ຄັ້ງຜ່ານມາ (ຕາມແບບຟອມ).
- ໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດ ແມ່ນມີອາຍຸ ດັ່ງນີ້:
  - ກໍລະນີ ໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ ເຊັນອະນຸມັດໃນເດືອນ 1-8, ໜັງສືດັ່ງກ່າວນຳໃຊ້ໄດ້ 6 ເດືອນ.
  - ກໍລະນີ ໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ ເຊັນອະນຸມັດໃນເດືອນ 9-12, ໜັງສືດັ່ງກ່າວນຳໃຊ້ໄດ້ ບໍ່ເກີນເດືອນ 2 ຂອງປີທັດໄປ.
  - ໃນກໍລະນີໜັງສືແຈ້ງການຈຳໜ່າຍດັ່ງກ່າວໝົດອາຍຸລົງ ແຕ່ຍັງບໍ່ສາມາດຈຳໜ່າຍສຳເລັດ ຫຼື ບໍ່ທັນໄດ້ຈຳໜ່າຍ ບໍລິສັດຕ້ອງໄດ້ສະເໜີ ກົມຄຸ້ມຄອງບໍ່ແຮ່ ພິຈາລະນາອອກໜັງສືແຈ້ງການຈຳໜ່າຍສະບັບໃໝ່ ຫຼື ຕໍ່ອາຍຸໜັງສືແຈ້ງດັ່ງກ່າວ ໃຫ້ຕາມແຕ່ລະກໍລະນີ
- ເມື່ອໄດ້ຮັບເອກະສານແລ້ວ ກົມຄຸ້ມຄອງບໍ່ແຮ່ ຈະໃຊ້ເວລາຄົ້ນຄວ້າ ແລະ ເຊັນໜັງສືແຈ້ງການຈຳໜ່າຍ ຜະລິດຕະພັນແຮ່ທາດ ໃຫ້ສຳເລັດພາຍໃນ 1 ວັນລັດຖະການ.

- ພາຍຫຼັງອອກໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດແລ້ວ, ກົມຄຸ້ມຄອງບໍ່ແຮ່ ຈະສົ່ງໜັງສືດັ່ງກ່າວ ຫາພາກສ່ວນທີ່ກ່ຽວຂ້ອງ (ກົມພາສີ, ກົມຄຸ້ມຄອງຊັບສິນແຫ່ງລັດ, ກົມສ່ວຍສາອາກອນ, ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ) ເພື່ອຮັບຊາບ, ຄິດໄລ່ ຈັດເກັບພັນທະ ດ້ານການເງິນຕາມລະບຽບການທີ່ກ່ຽວຂ້ອງ ແລະ ຕິດຕາມກວດກາ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ໜັງສືສະເໜີ (ຕາມແບບຟອມ ຢູ່ໜ້າ...).
- ແຜນການຈຳໜ່າຍຜະລິດຕະພັນແຮ່ທາດທີ່ຖືກຮັບຮອງ;
- ຮູບພາບຜະລິດຕະພັນແຮ່ທາດທີ່ຈະຈຳໜ່າຍ;
- ຜົນວິໄຈແຮ່ທາດ;
- ສັນຍາ ຊື້-ຂາຍ ແຮ່ທາດ ຂອງບໍລິສັດກັບລູກຄ້າ.
- ລາຍງານຕົວເລກການຈຳໜ່າຍ (ຕາມແບບຟອມ) ແລະ ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານ ການເງິນ ເປັນຕົ້ນ: ຄ່າຊັບພະຍາກອນແຮ່ທາດ, ພາສີ-ກອນ ແລະ ຄ່າທຳນຽມອື່ນໆ (ກໍລະນີທີ່ເຄີຍຈຳໜ່າຍ ຜ່ານມາ).
- ຊຳລະພັນທະທາງດ້ານການເງິນໃຫ້ຄົບຖ້ວນຕາມປະລິມານແຮ່ທີ່ລະບຸໃນໜັງສືແຈ້ງການຈຳໜ່າຍຜະລິດຕະ ພັນແຮ່ທາດ.
- ປະສານສົມທົບພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ເພື່ອລົງຕິດຕາມກວດກາການເຄື່ອນ ຍ້າຍ ຫຼື ຈຳໜ່າຍຜະລິດຕະພັນແຮ່ທາດ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ອອກໜັງສືແຈ້ງການຈຳໜ່າຍແຕ່ລະຄັ້ງ ໂດຍກຳນົດຈຳນວນ, ຄຸນນະພາບ, ຂະໜາດ, ເສັ້ນທາງການຂົນສົ່ງ, ດ່ານສົ່ງອອກ (ກໍລະນີສົ່ງອອກຕ່າງປະເທດ) ແລະ ບ່ອນຈຳໜ່າຍ ເພື່ອສົ່ງໃຫ້ ກະຊວງການເງິນຄິດໄລ່ ແລະ ເກັບພັນທະທາງດ້ານການເງິນຕາມທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ ແລະ ລະບຽບກົດໝາຍ.
- ສົ່ງໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ ຫາພາກສ່ວນທີ່ກ່ຽວຂ້ອງ (ກົມພາສີ, ກົມຄຸ້ມຄອງຊັບ ສິນແຫ່ງລັດ, ກົມສ່ວຍສາອາກອນ, ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ ນະຄອນຫຼວງ) ເພື່ອຮັບຊາບ, ຕິດຕາມ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ.

- ປະສານສົມທົບພະແນກການເງິນແຂວງ (ຂະແໜງຄຸ້ມຄອງຊັບສິນແຫ່ງລັດ) ເພື່ອຕິດຕາມກວດກາການ ເຄື່ອນຍ້າຍ ຫຼື ຈຳໜ່າຍຜະລິດຕະພັນແຮ່ທາດ.
- ຕິດຕາມກວດກາຕາມແຜນການຈຳໜ່າຍປະຈຳປີ ແລະ ໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດໃນ ແຕ່ລະຄັ້ງ ໂດຍການເຊັນບົດບັນທຶກຮ່ວມກັນ ແລະ ນຳໃຊ້ໃບຢັ້ງຢືນການເຄື່ອນຍ້າຍແຮ່ທາດ (ບໍ່ໃຫ້ອອກ ໜັງສືຢ່າງອື່ນອີກ).

- ໃນກໍລະນີການຈຳໜ່າຍ ຫຼື ສົ່ງອອກ ຫາກຍັງບໍ່ຄົບຕາມຈຳນວນໃນໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ ກໍ່ໃຫ້ສືບຕໍ່ຕິດຕາມ.
- ຕິດຕາມກວດການ້ຳໜັກທີ່ບັນຈຸໃສ່ລົດຂົນສົ່ງ ໂດຍອີງຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.
- ພະນັກງານຕິດຕາມກວດກາການເຄື່ອນຍ້າຍ ຫຼື ຈຳໜ່າຍຜະລິດຕະພັນແຮ່ທາດດັ່ງກ່າວ ແມ່ນປະກອບມີ: ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ພະແນກການເງິນ ແຂວງ (ຂະແໜງຄຸ້ມຄອງຊັບສິນແຫ່ງລັດ) ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ພາກສ່ວນລະ 1 ຄົນ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງ ກະຊວງທີ່ກ່ຽວຂ້ອງ

- ບໍ່ມີ

VIII. ແຜນນຳເຂົ້າປະຈຳປີ (Master List).

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ການພິຈາລະນາແຜນນຳເຂົ້າປະຈຳປີ ແມ່ນອີງໃສ່ຂໍ້ມູນໃນບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ສັນຍາຊຸດຄົ້ນ ແລະ ປຸງແຕ່ງແຮ່ທາດ. ທາງດ້ານນິຕິກຳແມ່ນ ອີງໃສ່ບົດແນະນຳ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າ ຂອງວິສະຫະກິດ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019, ເຊິ່ງຂັ້ນຕອນການສະເໜີ ແລະ ພິຈາລະນາປະກອບມີ:
  - ໃບສະເໜີຂໍນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າປະຈຳປີ ຂອງບໍລິສັດ.
  - ໃບມອບສິດໃຫ້ຜູ້ດຳເນີນແລ່ນເອກະສານ ໂດຍການຢັ້ງຢືນ ແລະ ຮັບຮອງຈາກຜູ້ອຳນວຍການຂອງວິສາຫະກິດນັ້ນ.
  - ບົດລາຍງານສະພາບການດຳເນີນທຸລະກິດໂດຍຫຍໍ້ ໂດຍໃຫ້ປະກອບມີເນື້ອໃນດ້ານການເຄື່ອນໄຫວການຊຸດຄົ້ນ, ການຜະລິດ ແລະ ຈຳໜ່າຍແຮ່ທາດ ຕົວຈິງຂອງປີຜ່ານມາ, ດ້ານແຮງງານ ແລະ ອື່ນໆ (ປະກອບຕາມຮ່າງແບບຟອມ_ເອກະສານຄັດຕິດທ້າຍ 1).
  - ຮ່າງແຜນນຳເຂົ້າປະຈຳປີ (ຕາມແບບພິມ/ຕາຕະລາງ ທີ່ ຂະແໜງແຜນການ ແລະ ການລົງທຶນ ກຳນົດ_ເອກະສານຄັດຕິດທ້າຍ 2) ແລະ ແບບ Soft File.

- ສຳເນົາໃບອະນຸຍາດລົງທຶນ (ຖ້າມີ), ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນກິດຈະການຈາກຂະແໜງພະລັງງານ ແລະ ບໍ່ແຮ່, ໃບຢັ້ງຢືນການມອບພັນທະອາກອນປະຈຳປີ ໃນປີຜ່ານມາ, ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ສັນຍາທີ່ເຊັນກັບລັດຖະບານ ແລະ ໃບອະນຸຍາດປຸກສ້າງ (ໃນກໍລະນີ ບໍລິສັດ/ໂຮງງານ ຂໍປຸກສ້າງໃໝ່).
- ສະຫຼຸບ ການນຳເຂົ້າຕົວຈິງໃນປີຜ່ານມາ (ໃຫ້ມີການສະຫລຸບການນຳເຂົ້າປະຈຳປີ ໃນປີຜ່ານມາ ໂດຍໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ດ່ານພາສີ).
- ສຳເນົາ ແຜນການເຄື່ອນໄຫວ ປະຈຳປີ ຂອງວິສາຫະກິດ ທີ່ຜ່ານການຮັບຮອງຈາກຂະແໜງພະລັງງານ ແລະ ບໍ່ແຮ່.
- ການນຳເຂົ້າທາດເຄມີ ຕ້ອງມີໃບຢັ້ງຢືນຂຶ້ນທະບຽນທາດເຄມີ ຈາກກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນ.
- ການນຳເຂົ້າວັດຖຸລະເບີດ ຕ້ອງໄດ້ສະເໜີຜ່ານ ແລະ ຮັບຮອງຢັ້ງຢືນ ຈາກກົມອຸດສາຫະກຳປ້ອງກັນຊາດ, ກະຊວງປ້ອງກັນປະເທດ ແລະ ມີໃບທະບຽນທາດລະເບີດຄົບຖ້ວນ ຈາກຂະແໜງການດັ່ງກ່າວ ຈຶ່ງສາມາດເອົາເຂົ້າໃນແຜນນຳເຂົ້າໄດ້.

➢ ຫຼັງຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ຈະດຳເນີນການກວດກາເອກະສານ ແລະ ລາຍການແຜນນຳເຂົ້າປະຈຳປີ ໂດຍອີງໃສ່ແຜນການ ແລະ ຄວາມຕ້ອງການຕາມຂໍ້ມູນຂອງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຖ້າເຫັນວ່າເອກະສານມີຄວາມຖືກຕ້ອງ, ສອດຄ່ອງ ແລະ ຄົບຖ້ວນໝົດແລ້ວ, ກົມຄຸ້ມຄອງບໍ່ແຮ່ ຈະຄົ້ນຄວ້ານຳສະເໜີຕໍ່ກອງປະຊຸມພິຈາລະນາແຜນນຳເຂົ້າປະຈຳປີ ທີ່ຈັດຂຶ້ນໂດຍ ກົມຄຸ້ມຄອງບໍ່ແຮ່, ຊຶ່ງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ ແລະ ບໍລິສັດ ພາຍໃນ 7 ວັນລັດຖະການ ຫຼັງຈາກນັ້ນ, ບໍລິສັດ ຫຼື ວິສາຫະກິດ ຕ້ອງປັບປຸງແຜນນຳເຂົ້າ ຕາມມະຕິຂອງກອງປະຊຸມ ພາຍໃນ 15 ວັນລັດຖະການ; ກໍລະນີ ບໍລິສັດ ຫຼື ວິສາຫະກິດ ຫາກບໍ່ປັບປຸງແຜນ ພາຍໃນກຳນົດເວລາດັ່ງກ່າວ ຖືວ່າສະຫຼະສິດໃນການຮັບນະໂຍບາຍ, ຖ້າຫາກຕ້ອງການສືບຕໍ່ແມ່ນໃຫ້ຍື່ນເອກະສານຄືນໃໝ່.

➢ ພາຍຫຼັງ ບໍລິສັດ ປັບປຸງແຜນນຳເຂົ້າຕາມມະຕິກອງປະຊຸມແລ້ວ, ຂະແໜງພະລັງງານ ແລະ ບໍ່ແຮ່ ຕ້ອງນຳສົ່ງແຜນນຳເຂົ້າດັ່ງກ່າວ ໃຫ້ຂະແໜງແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ດຳເນີນການຄົ້ນຄວ້າ ແລະ ພິຈາລະນາ ອອກໃບຮັບຮອງ ແຜນນຳເຂົ້າ ພາຍໃນ 7 ວັນລັດຖະການ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

➢ ດຳເນີນວຽກງານໃຫ້ຖືກຕ້ອງ, ສອດຄ່ອງ ຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

➢ ສ້າງບົດແຜນການນຳເຂົ້າປະຈຳປີ ໃຫ້ສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ ຕາມການແນະນຳ ແລະ ຮ່າງແບບຟອມ ແລະ ຄູ່ມືແນະນຳຂອງກະຊວງແຜນການ ແລະ ການລົງທຶນ.

➢ ປະຕິບັດບັນດາພັນທະຕ່າງໆ ໃນໄລຍະສ້າງບົດແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານປຸງແຕ່ງແຮ່ທາດ ໃຫ້ຄົບຖ້ວນເປັນປະຈຳ.

➢ ອຳນວຍຄວາມສະດວກໃນການລາຍງານ, ສະໜອງຂໍ້ມູນ ແລະ ຮັບຜິດຊອບຄ່າໃຊ້ຈ່າຍ ຫາກມີຄວາມຈຳເປັນໃນການລົງກວດກາເຄື່ອງນຳເຂົ້າຕົວຈິງຢູ່ພາກສະໜາມ ຂອງພາກສ່ວນທີ່ກ່ຽວຂ້ອງ ຂອງລັດ.

- ປັບປຸງແຜນນຳເຂົ້າ ຕາມຄຳເຫັນ ແລະ ຄຳແນະນຳ ຂອງ ກົມຄຸ້ມຄອງບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີເນື້ອໃນສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ.
- ສຳເນົາແຜນນຳເຂົ້າສະບັບທີ່ຜ່ານການຮັບຮອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ທາງສູນກາງ ແລະ ທ້ອງຖິ່ນ.
- ເກັບກຳສະຖິຕິການນຳເຂົ້າ ແລະ ລາຍງານຫາພາກສ່ວນທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນເປັນປະຈຳ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ເກັບກຳສະຖິຕິການນຳເຂົ້າຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ
- ກວດກາຄວາມຖືກຕ້ອງຂອງເອກະສານ ການສະເໜີຂໍແຜນນຳເຂົ້າປະຈຳປີ
- ກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງທາງດ້ານເຕັກນິກ ເຊັ່ນ: ບັນດາລາຍການຂໍນຳເຂົ້າ, ປະລິມານ, ຈຳນວນ ແລະ ມູນຄ່າ.
- ລາຍງານຜົນການຄົ້ນຄວ້າຕໍ່ກອງປະຊຸມພິຈາລະນາອະນຸມັດແຜນນຳເຂົ້າປະຈຳປີ.
- ສົມທົບກັບບໍລິສັດ ປັບປຸງແຜນການ ນຳເຂົ້າປະຈຳປີ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຄຳຄິດຄຳເຫັນຂອງກອງປະຊຸມພິຈາລະນາແຜນນຳເຂົ້າປະຈຳປີ.
- ນຳສົ່ງເອກະສານແຜນນຳເຂົ້າປະຈຳປີ ຫຼັງຈາກມີການປັບປຸງຄົບຖ້ວນໃຫ້ກະຊວງແຜນການ ແລະ ການລົງທຶນ ພິຈາລະນາຮັບຮອງ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ.

- ຮັບຊາບ ແລະ ສຳເນົາແຜນການນຳເຂົ້າປະຈຳປີ ສະບັບທີ່ຮັບຮອງແລ້ວຈາກກະຊວງແຜນການ ແລະ ການລົງທຶນ.
- ຕິດຕາມການນຳເຂົ້າ ແລະ ການນຳໃຊ້ໃຫ້ສອດຄ່ອງກັບແຜນນຳເຂົ້າທີ່ຖືກຮັບຮອງ.
- ເກັບກຳສະຖິຕິ ແລະ ລາຍງານໃຫ້ພາກສ່ວນສູນກາງເປັນປະຈຳ

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່ ຄົ້ນຄວ້າທາງດ້ານເຕັກນິກ, ປະລິມານ, ຈຳນວນ, ມູນຄ່າ.
- ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຄົ້ນຄວ້າທາງດ້ານນະໂຍບາຍພາສີ ແລະ ອາກອນມູນຄ່າເພີ່ມ ແລະ ພິຈາລະນາຮັບຮອງແຜນນຳເຂົ້າປະຈຳປີ.
- ກະຊວງອຸດສາຫະກຳ ແລະ ການຄ້າ ປະກອບຄຳເຫັນ ຕໍ່ບັນດາລາຍການນຳເຂົ້າທີ່ກ່ຽວຂ້ອງກັບຂະແໜງການຕົນເອງ ເປັນຕົ້ນແມ່ນ ທາດເຄມີ, ວັດສະດຸ ອຸປະກອນ ແລະ ອື່ນໆ.
- ກະຊວງໂຍທາທິການ ແລະ ຂົນສົ່ງ ປະກອບຄຳເຫັນ ຕໍ່ບັນດາລາຍການທີ່ຕິດພັນກັບພາຫານະ ແລະ ອື່ນໆ ທີ່ຕິດພັນກັບຂະແໜງການຂອງຕົນເອງ
- ກະຊວງການເງິນ ປະກອບຄຳເຫັນທີ່ຕິດພັນກັບຂອດການອະນຸຍາດນຳເຂົ້າຕົວຈິງ, ເກັບກຳສະຖິຕິການນຳເຂົ້າຕົວຈິງ ແລະ ອື່ນໆ ທີ່ຕິດພັນກັບຂະແໜງການຂອງຕົນເອງ
- ກະຊວງໄປສະນີ ແລະ ການສື່ສານ ປະກອບຄຳເຫັນຕໍ່ບັນດາລາຍການເຄື່ອງມືການສື່ສານ ແລະ ອື່ນໆ ທີ່ຕິດພັນກັບຂະແໜງການຂອງຕົນເອງ
- ກະຊວງສາທາລະນະສຸກ ປະກອບຄຳເຫັນຕໍ່ບັນດາລາຍການທາດເຄມີ ແລະ ອື່ນໆ ທີ່ຕິດພັນກັບຂະແໜງການຂອງຕົນເອງ
- ກະຊວງປ້ອງກັນປະເທດ ປະກອບຄຳເຫັນຕໍ່ບັນດາລາຍການທີ່ຕິດພັນກັບຄວາມໝັ້ນຄົງຂອງປະເທດ ເຊັ່ນ ທາດລະເບີດ ແລະ ອື່ນໆ.

IX. ການສົ່ງຕົວຢ່າງແຮ່ທາດໄປວິໄຈ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ບໍລິສັດ ຕ້ອງປະກອບເອກະສານໃຫ້ຄົບຖ້ວນສະເໜີຫາ ກົມຄຸ້ມຄອງບໍ່ແຮ່ ຊຶ່ງເອກະສານປະກອບມີດັ່ງນີ້:
  - ໃບສະເໜີຂໍສົ່ງຕົວຢ່າງໄປວິໄຈ ຢູ່ພາຍໃນ ຫຼື ຕ່າງປະເທດ.
  - ໃບຢັ້ງຢືນໄລຍະດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ໃບອະນຸຍາດຂຸດຄົ້ນແຮ່ທາດ ຂອງ ກົມຄຸ້ມຄອງບໍ່ແຮ່.
  - ແຜນການສົ່ງຕົວຢ່າງ ໄປວິໄຈ ທີ່ໄດ້ລະບຸໄວ້ໃນແຜນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ແຜນການປະຕິບັດວຽກງານ ໃນເຂດຂຸດຄົ້ນ (ສະບັບໂກປີ) ຊຶ່ງ ກົມຄຸ້ມຄອງບໍ່ແຮ່, ກະຊວງ ພະລັງງານ ແລະ ບໍ່ແຮ່ ໄດ້ຮັບຮອງເອົາແລ້ວ
  - ແບບຟອມການອະນຸຍາດສົ່ງຕົວຢ່າງແຮ່ທາດໄປວິໄຈ ຢູ່ພາຍໃນ ຫຼື ຕ່າງປະເທດ ຂອງກົມຄຸ້ມຄອງບໍ່ແຮ່.
- ກົມຄຸ້ມຄອງບໍ່ແຮ່ ກວດກາເອກະສານ ຫາກມີຄວາມຖືກຕ້ອງ ແລະ ຄົບຖ້ວນໝົດແລ້ວ ແມ່ນຈະສົມທົບກັບ ແລະ ບໍລິສັດ ລົງກວດກາ ແລະ ເກັບຕົວຢ່າງ (ກຳນົດເວລາໃນການລົງກວດກາ ແລະ ເກັບຕົວຢ່າງແມ່ນຂຶ້ນກັບສະພາບຄວາມຍາກ ແລະ ງ່າຍ ເວລາຈັດຕັ້ງປະຕິບັດວຽກຕົວຈິງ)
- ຫຼັງຈາກລົງກວດກາ ແລະ ເກັບຕົວຢ່າງສຳເລັດແລ້ວ ກົມຄຸ້ມຄອງບໍ່ແຮ່ ຈະເຮັດໃບອະນຸຍາດ ສົ່ງຕົວຢ່າງໄປວິໄຈ ໃຫ້ບໍລິສັດ ພາຍໃນ 5 ວັນລັດຖະການ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ປະກອບເອກະສານໃຫ້ຄົບຖ້ວນຕາມແບບຟອມ ແລະ ຄຳແນະນຳຂອງກົມຄຸ້ມຄອງບໍ່ແຮ່.
- ອຳນວຍຄວາມສະດວກໃຫ້ແກ່ ພາກສ່ວນທີ່ກ່ຽວຂ້ອງຂອງກະຊວງພະລັງງານ ແລະ ບໍ່ແຮ່ (ກົມຄຸ້ມຄອງບໍ່ແຮ່) ໃນການສະໜອງຂໍ້ມູນ ແລະ ການລົງກວດກາຕົວຢ່າງ.
- ຮັບຜິດຊອບຄ່າໃຊ້ຈ່າຍໃນການວິໄຈຕົວຢ່າງທີ່ທາງ ກຄຮ ເກັບມາວິໄຈເພື່ອສົມທຽບ ພ້ອມທັງສະຫຼຸບລາຍງານຜົນການວິໄຈ ສົ່ງໃຫ້ ກົມຄຸ້ມຄອງບໍ່ແຮ່ ເພື່ອຊາບ ແລະ ຕິດຕາມ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ເປັນເຈົ້າການຫຼັກໃນການຄົ້ນຄວ້າ ເອກະສານການສະເໜີຂໍສົ່ງຕົວຢ່າງໄປວິໄຈ ຂອງ ບໍລິສັດ;
- ພາຍຫຼັງໄດ້ຮັບໃບສະເໜີຂໍສົ່ງອອກຕົວຢ່າງເພື່ອໄປວິໄຈຫາຄຸນນະພາບ ແລະ ອົງປະກອບຂອງແຮ່ທາດ ກົມຄຸ້ມຄອງບໍ່ແຮ່ຈະລົງໄປກວດກາປະລິມານ ແລະ ເກັບຕົວຢ່າງມາວິໄຈເພື່ອສົມທຽບ.
- ນຳເອົາຕົວຢ່າງແຮ່ທາດ ທີ່ເກັບຢູ່ພາກສະໜາມ ມາເຮັດການວິໄຈຄຸນນະພາບແຮ່ ຢູ່ຕາມສູນ, ສະຖາບັນ ຫຼື ຫ້ອງວິໄຈ ທີ່ມີຄວາມເຊື່ອຖື ເພື່ອປຽບທຽບ ກັບຜົນວິໄຈຂອງບໍລິສັດ
- ຫຼັງຈາກ ຂະບວນການທາງດ້ານເອກະສານຄົບຖ້ວນແລ້ວ ແມ່ນພິຈາລະນາອະນຸຍາດສົ່ງຕົວຢ່າງໄປວິໄຈ;

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ.

- ບໍ່ມີ

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບ ໃນການຄົ້ນຄວ້າເອກະສານ, ລົງກວດກາ ເກັບຕົວຢ່າງ, ນຳຕົວຢ່າງໄປວິໄຈ ຢູ່ສູນ, ສະຖາບັນ ຫຼື ຫ້ອງແລບທີ່ມີຄວາມເຊື່ອຖື. ລາຍງານ ຜົນການທົດລາຍໃຫ້ ກະຊວງການເງິນ ຄິດໄລ່ເກັບຄ່າພັນທະທີ່ກ່ຽວຂ້ອງ
- ກະຊວງການເງິນ ອຳນວຍຄວາມສະດວກ ເວລານຳເຂົ້າ ແລະ ສົ່ງອອກຕົວຢ່າງ.

X. ການພິຈາລະນາແຜນການອອກແບບອ່າງຫາງແຮ່.

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.



- ບໍລິສັດ ຕ້ອງມີເອກະສານທາງດ້ານນິຕິກຳຄົບຖ້ວນເປັນຕົ້ນແມ່ນ: ມີຂໍ້ຕົກລົງອະນຸຍາດໃຫ້ສຶກສາ ຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ ຈາກກະຊວງພະລັງງານ ແລະ ບໍ່ແຮ່ ມີຂໍ້ມູນບັນດາບົດ ວິພາກເສດຖະກິດ-ເຕັກນິກຄົບຖ້ວນ.
- ບໍລິສັດ ສົມທົບກັບ ກົມຄຸ້ມຄອງບໍ່ແຮ່ ເພື່ອປຶກສາຫາລື ບັນດາກອບໜ້າວຽກ (TOR) ການສ້າງບົດ ແຜນການອອກແບບອ່າງຫາງແຮ່ ແລະ ປະກອບບົດຕາມແບບຟອມທີ່ຊ້ອນທ້າຍບົດແນະນຳສະບັບນີ້.
- ບໍລິສັດ ສ້າງບົດແຜນການອອກແບບອ່າງຫາງແຮ່ ສຳເລັດ ແລະ ສະເໜີຫາ ກົມຄຸ້ມຄອງບໍ່ແຮ່ ພິຈາລະນາ.
- ກຄຮ ສົມທົບກັບບໍລິສັດ ຄົ້ນຄວ້າ ແລະ ປັບປຸງໃຫ້ບົດດັ່ງກ່າວມີເນື້ອໃນທີ່ຄົບຖ້ວນສົມບູນ, ຊຶ່ງປະກອບ ມີບັນດາໜ້າວຽກ: ຄົ້ນຄວ້າບົດ, ແຈ້ງຄຳເຫັນປັບປຸງບົດ, ຈັດກອງປະຊຸມທາງດ້ານເຕັກນິກ, ສົມທົບກັນ ປັບປຸງບົດແຜນການອອກແບບອ່າງຫາງແຮ່ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ.
- ລົງກວດກາສະພາບພື້ນທີ່ຕົວຈິງພາກສະໜາມ ແລະ ເປີດກອງປະຊຸມເຕັກນິກ ກ່ອນການພິຈາລະນາ ຮັບຮອງແຜນການອອກແບບອ່າງຫາງແຮ່.
- ກະຊວງ ພບ ຮັບຮອງເອົາບົດແຜນການອອກແບບອ່າງຫາງແຮ່ ຢ່າງຊ້າບໍ່ໃຫ້ເກີນ 120 ວັນ ນັບແຕ່ວັນ ໄດ້ຮັບບົດລາຍງານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບໍລິສັດ

- ດຳເນີນວຽກງານໃຫ້ຖືກຕ້ອງ, ສອດຄ່ອງ ຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
- ສ້າງບົດແຜນການອອກແບບອ່າງຫາງແຮ່ ໃຫ້ສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ ຕາມການແນະນຳ ແລະ ຮ່າງແບບຟອມຂອງກົມຄຸ້ມຄອງບໍ່ແຮ່.
- ປະຕິບັດບັນດາພັນທະຕ່າງໆ ໃນໄລຍະສ້າງບົດແຜນການອອກແບບອ່າງຫາງແຮ່ ໃຫ້ຄົບຖ້ວນເປັນປະຈຳ.
- ອຳນວຍຄວາມສະດວກ ແລະ ຮັບຜິດຊອບຄ່າໃຊ້ຈ່າຍໃນການລົງກວດກາສະພາບພື້ນທີ່ຕົວຈິງຢູ່ພາກສະໜາມ ຂອງພາກສ່ວນທີ່ກ່ຽວຂ້ອງ ຂອງລັດກ່ອນການພິຈາລະນາຮັບຮອງບົດ.
- ປັບປຸງບົດ ຕາມຄຳເຫັນ ແລະ ຄຳແນະນຳ ຂອງກົມຄຸ້ມຄອງບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ບົດມີເນື້ອໃນສອດຄ່ອງ, ຖືກຕ້ອງ ແລະ ຄົບຖ້ວນ.
- ສຳເນົາບົດທີ່ຜ່ານການຮັບຮອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດ ທາງສູນກາງ ແລະ ທ້ອງຖິ່ນ.

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ກົມຄຸ້ມຄອງບໍ່ແຮ່ ສົມທົບກັບບໍລິສັດ ຄົ້ນຄວ້າ ແລະ ປັບປຸງໃຫ້ບົດດັ່ງກ່າວມີເນື້ອໃນທີ່ຄົບຖ້ວນສົມບູນ, ຊຶ່ງປະກອບມີບັນດາໜ້າວຽກ: ຄົ້ນຄວ້າບົດ, ແຈ້ງຄຳເຫັນປັບປຸງບົດ, ຈັດກອງປະຊຸມທາງດ້ານເຕັກນິກ ແລະ ສົມທົບກັນປັບປຸງບົດແຜນການອອກແບບອ່າງຫາງແຮ່ ໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ.
- ລົງກວດກາສະພາບພື້ນທີ່ຕົວຈິງພາກສະໜາມ ແລະ ເປີດກອງປະຊຸມເຕັກນິກ ກ່ອນການພິຈາລະນາຮັບຮອງ.
- ກົມຄຸ້ມຄອງບໍ່ແຮ່ ພິຈາລະນາຮັບຮອງເອົາບົດແຜນການອອກແບບອ່າງຫາງແຮ່ ຢ່າງຊ້າບໍ່ໃຫ້ເກີນ 7 ວັນ ລັດຖະການ ນັບແຕ່ວັນໄດ້ຮັບບົດແຜນການ ທີ່ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ.

- ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງລັດ ສົມທົບກັບ ບໍລິສັດ ລົງກວດກາສະພາບຕົວຈິງຢູ່ພາກສະໜາມ.
- ສຳເນົາ ບົດແຜນການອອກແບບອ່າງຫາງແຮ່ ສະບັບຮັບຮອງ ແລະ ເຮັດໜ້າທີ່ ຕິດຕາມການດຳເນີນວຽກງານຂອງບໍລິສັດ, ສັງລວມລາຍງານ ການເຄື່ອນໄຫວວຽກງານຂອງ ບໍລິສັດ ເປັນເດືອນ, ງວດ, ແລະ ປີ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງບັນດາກະຊວງ

- ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບຫຼັກ.

XI. ຂັ້ນຕອນການສະເໜີ ແລະ ພິຈາລະນາ ການຮັບຮອງແຜນປິດບໍ່

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.

ກ. ການປະກອບເອກະສານ:



- ໜັງສືສະເໜີ (ຕາມຮ່າງແບບຟອມ).
- ປຶດແຜນການປິດບໍ່ແຮ່ (ຕາມຮ່າງແບບຟອມຂອງກົມຄຸ້ມຄອງບໍ່ແຮ່).
- ສຳລັບປຶດແຜນການປິດບໍ່ແຮ່ເບື້ອງຕົ້ນ ຕ້ອງມີຂໍ້ຕົກລົງກ້າວເຂົ້າສູ່ໄລຍະສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຈາກກະຊວງພະລັງງານ ແລະ ບໍ່ແຮ່, ສ່ວນປຶດແຜນການປິດບໍ່ແຮ່ ສະບັບທົບທວນ ແມ່ນໃຫ້ມີໃບຢັ້ງຢືນແຜນການປິດບໍ່ແຮ່ເບື້ອງຕົ້ນແທນ.
- ໃບອະນຸຍາດລົງທຶນ ທີ່ອະນຸມັດໂດຍ ກະຊວງແຜນການ ແລະ ການລົງທຶນ.
- ສັນຍາສຳປະທານໂຄງການພັດທະນາບໍ່ແຮ່ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ບໍລິສັດ/ຜູ້ລົງທຶນ.
- ຂໍ້ມູນທີ່ຂຽນໃນປຶດແຜນການປິດບໍ່ແຮ່ ຫາກຜິດພາດບໍລິສັດຕ້ອງຮັບຜິດຊອບ.

ຂ. ການຄົ້ນຄວ້າ ແລະ ຮັບຮອງແຜນປິດບໍ່ແຮ່

- ຂັ້ນຕອນການຄົ້ນຄວ້າພິຈາລະນາຮັບຮອງແຜນປິດບໍ່ແຮ່ ມີດັ່ງນີ້:

ຄ. ແຜນການປິດບໍ່ແຮ່ເບື້ອງຕົ້ນ.

- ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ບົດແຜນການປິດບໍ່ແຮ່ເບື້ອງຕົ້ນ ຈາກບໍລິສັດ/ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງ. ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ຈະໄດ້ດຳເນີນການສຶກສາຄົ້ນຄວ້າ, ຈັດກອງປະຊຸມ ແລະ ອອກໃບຢັ້ງຢືນຮັບຮອງເອົາບົດແຜນການປິດບໍ່ແຮ່ເບື້ອງຕົ້ນ ພ້ອມກັບການຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາຍໃນ 120 ວັນ ນັບແຕ່ວັນທີໄດ້ຮັບແຜນການປິດບໍ່ແຮ່ເບື້ອງຕົ້ນຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ງ. ການທົບທວນແຜນການປິດບໍ່ແຮ່.

- ບໍລິສັດ/ຜູ້ລົງທຶນ ຕ້ອງໄດ້ທົບທວນແຜນການປິດບໍ່ແຮ່ ທຸກໆ 3 ປີ ເພື່ອປັບປຸງໃຫ້ແທດເໝາະກັບສະພາບການ ແລະ ນຳສົ່ງໃຫ້ ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ຄົ້ນຄວ້າພິຈາລະນາ.
- ພາຍຫຼັງໄດ້ຮັບເອກະສານ ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ຈະປະສານກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາຮັບຮອງ ຫຼື ປະຕິເສດ ການທົບທວນແຜນການປິດບໍ່ແຮ່ ພາຍໃນ 60 ວັນ ນັບແຕ່ວັນທີໄດ້ຮັບແຜນການດັ່ງກ່າວ.

ຈ. ແຜນການປິດບໍ່ແຮ່ສະບັບສຸດທ້າຍ.

- ກ່ອນສິ້ນສຸດການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ 2 ປີ ບໍລິສັດ/ຜູ້ລົງທຶນ ຕ້ອງເຮັດໜັງສືສະເໜີ ແລະ ນຳສົ່ງແຜນການປິດບໍ່ແຮ່ສະບັບສຸດທ້າຍ ໃຫ້ກົມຄຸ້ມຄອງບໍ່ແຮ່ ຄົ້ນຄວ້າພິຈາລະນາ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງ ບໍລິສັດ

- ບໍລິສັດຕ້ອງສະໜອງຂໍ້ມູນ ເນື້ອໃນບົດແຜນການປິດບໍ່ແຮ່ໃຫ້ຖືກຕ້ອງ ແລະ ບໍລິສັດຕ້ອງຮັບຜິດຊອບທຸກຂໍ້ມູນທີ່ນຳມາສະເໜີ.
- ບໍລິສັດຕ້ອງຍື່ນບົດບົດແຜນການປິດບໍ່ແຮ່ສະບັບປັບປຸງ ພາຍຫຼັງທີ່ໄດ້ຮັບແຈ້ງການໃຫ້ປັບປຸງບົດແຜນການປິດບໍ່ແຮ່ ຈາກກົມຄຸ້ມຄອງບໍ່ແຮ່ ເມື່ອຜ່ານກອງປະຊຸມເຕັກນິກ ແລະ ກອງປະຊຸມເປີດກວ້າງ.
- ແຕ່ງຕັ້ງທີມງານ ຫຼື ຜູ້ທີ່ມີຄວາມຊຳນານງານ ເພື່ອສະໜອງຂໍ້ມູນ, ນຳສະເໜີ ແລະ ຜ່ານບົດແຜນການປິດບໍ່ແຮ່ ໃນກອງປະຊຸມຂັ້ນເຕັກນິກ ແລະ ກອງປະຊຸມເປີດກວ້າງ.
- ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ກົມຄຸ້ມຄອງບໍ່ແຮ່ ໃນການດຳເນີນການຄົ້ນຄວ້າ ແລະ ທົບທວນ ບົດແຜນການປິດບໍ່ແຮ່.
- ຮັບຜິດຊອບຕໍ່ ທຸກຄ່າໃຊ້ຈ່າຍກ່ຽວກັບການຮັບຮອງແຜນການປິດບໍ່ແຮ່ (ເປີດກອງປະຊຸມເຕັກນິກ ແລະ ເປີດກອງປະຊຸມເປີດກວ້າງ).

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດແຜນການປິດບໍ່ແຮ່.
- ພິຈາລະນາ ແລະ ຮັບຮອງແຜນການປິດບໍ່ແຮ່.
- ແຕ່ງຕັ້ງຄະນະລົງກວດກາພື້ນທີ່ຕົວຈິງ ກ່ອນພິຈາລະນາ ແລະ ຮັບຮອງແຜນການປິດບໍ່ແຮ່ ສະບັບທົບທວນ ແລະ ບົດແຜນການປິດບໍ່ແຮ່ສະບັບສຸດທ້າຍ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ.

- ປະກອບຄຳເຫັນຕໍ່ບົດແຜນການປິດບໍ່ແຮ່ ໃນກອງປະຊຸມເປີດກວ້າງ;
- ເຂົ້າຮ່ວມເປັນຄະນະລົງກວດກາພື້ນທີ່ຕົວຈິງ ກ່ອນພິຈາລະນາ ແລະ ຮັບຮອງແຜນການປິດບໍ່ແຮ່ ສະບັບທົບທວນ ແລະ ບົດແຜນການປິດບໍ່ແຮ່ສະບັບສຸດທ້າຍ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກະຊວງທີ່ກ່ຽວຂ້ອງ

- ປະກອບຄຳເຫັນຕໍ່ບົດແຜນການປິດບໍ່ແຮ່ ໃນກອງປະຊຸມເປີດກວ້າງ.

XII. ຂັ້ນຕອນການສະເໜີ ແລະ ພິຈາລະນາ ການສົ່ງເນື້ອທີ່ຄືນ

1. ຂັ້ນຕອນການສະເໜີ ແລະ ພິຈາລະນາ.

ຜູ້ປະກອບການ ຂາເຂົ້າ-ຂາອອກ ພະແນກວິຊາການ ຫົວໜ້າ/ຮອງຫົວໜ້າ ກະຊວງ ຜທ ກົມ



- ການປະກອບເອກະສານ:
- ໜັງສືສະເໜີ (ຕາມແບບຟອມ ຢູ່ໜ້າ...)
- ສັນຍາສຳປະທານໂຄງການພັດທະນາບໍ່ແຮ່;
- ໃບອະນຸຍາດລົງທຶນ;
- ໃບທະບຽນວິສາຫະກິດ;
- ໃບຢັ້ງຢືນການປະຕິບັດພັນທະຄົບຖ້ວນ;
- ເອກະສານຢັ້ງຢືນຜົນການສຳເລັດການຟື້ນຟູ ແລະ ປິດບໍ່ແຮ່;
- ການຄົ້ນຄວ້າ ແລະ ຮັບຮອງແຜນປິດບໍ່ແຮ່
  - ບໍລິສັດ/ຜູ້ລົງທຶນ ທີ່ມີຈຸດປະສົງ ເພື່ອສົ່ງເນື້ອທີ່ເຂດສຳປະທານໂຄງການຂຸດຄົ້ນ ແລະ ປຸງແຕ່ແຮ່ທາດ ເຂດໃດໜຶ່ງ ຫຼື ທັງໝົດເນື້ອທີ່ໂຄງການ ທີ່ສຳເລັດການຟື້ນຟູເນື້ອທີ່ຄືນ ແລະ ປິດບໍ່ແຮ່ແລ້ວ ຫຼື ການ ປິດບໍ່ກ່ອນກຳນົດ ແມ່ນມີຂັ້ນຕອນການສະເໜີ ແລະ ຄົ້ນຄວ້າພິຈາລະນາດັ່ງນີ້:
- ການສົ່ງເນື້ອທີ່ເຂດສຳປະທານໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເຂດໃດໜຶ່ງຂອງໂຄງການ (ເຂດທີ່ ບໍ່ເປັນເສດຖະກິດ)
  - ພາຍຫຼັງໄດ້ຮັບຄຳຮ້ອງ ຈາກ ບໍລິສັດ / ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມຂໍ້ 1 ຂ້າງເທິງແລ້ວ ກົມຄຸ້ມຄອງບໍ່ແຮ່ ໄດ້ຮັບໜັງສືສະເໜີຂອງບໍລິສັດ/ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ, ກົມ ຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີໄປຍັງຂະແໜງການທີ່ກ່ຽວຂ້ອງສູນກາງ ທີ່ຢູ່ໃນຄະນະກຳມະການປິດ ບໍ່ແຮ່ຂອງໂຄງການ ເພື່ອຂໍລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ພາຍໃນກຳນົດເວລາ 1 ວັນລັດຖະການ. ພາຍຫຼັງ ໄດ້ລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນ ຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກຂະແໜງການທີ່ກ່ຽວຂ້ອງຄົບແລ້ວ, ກົມຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີ ໄປຍັງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອຂໍອະນຸມັດຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍ ການແຕ່ງຕັ້ງພະນັກງານລັດຖະກອນ ໄປປະຕິບັດວຽກງານຢູ່ຕ່າງແຂວງ ພາຍໃນ ກຳນົດເວລາ 3 ວັນລັດຖະການ.
  - ຄະນະກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກສູນກາງ ລົງປະສານສົມທົບກັບອຳນາດການປົກ ຄອງທ້ອງຖິ່ນ ແລະ ບໍລິສັດ/ຜູ້ລົງທຶນ ເພື່ອກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ພາກສະໜາມ ແລະ ເຮັດບົດບັນທຶກຮ່ວມກັນ. ຖ້າຫາກການກວດກາຫາກເຫັນວ່າການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນແຜນການປິດບໍ່ແຮ່ແລ້ວ ຄະນະກວດກາຕ້ອງໄດ້ປຶກ ສາຫາລືກັບຄະນະກຳມະການປິດບໍ່ແຮ່ຂອງໂຄງການ ພາຍໃນ 10 ວັນ. ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ລາຍງານການນຳກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຊາບ ແລະ ສະເໜີນຳສົ່ງເນື້ອໃນບົດລາຍງານໄປ ຍັງກະຊວງແຜນການ ແລະ ການລົງທຶນ ໃນນາມຄູ່ສັນຍາ ພິຈາລະນາ ຮັບເອົາເນື້ອທີ່ດັ່ງກ່າວຄືນ ແລ້ວ ດັດແກ້ສັນຍາສຳປະທານພັດທະນາບໍ່ແຮ່ ພາຍໃນ 15 ວັນ. ບໍລິສັດ/ຜູ້ລົງທຶນ ຈຶ່ງສາມາດຈັດຕັ້ງ ປະຕິບັດຕາມສັນຍາສຳປະທານພັດທະນາບໍ່ແຮ່ ສະບັບປັບປຸງ. ແຕ່ຖ້າກໍລະນີການລົງກວດກາເຫັນວ່າ

ບໍລິສັດ/ຜູ້ລົງທຶນ ຍັງບໍ່ສາມາດຟື້ນຟູເນື້ອທີ່ໄດ້ຕາມເງື່ອນໄຂ ແລະ ຕາມທີ່ກຳນົດໄວ້ໃນແຜນປິດບໍ່ແຮ່, ຄະນະກຳມະການປິດບໍ່ແຮ່ ຈະແນະນຳໃຫ້ ບໍລິສັດ/ຜູ້ລົງທຶນ ປັບປຸງຄືນ ຈົນກ່ວາຈະສາມາດຍອມຮັບໄດ້.

- ການສົ່ງເນື້ອທີ່ເຂດສຳປະທານໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດທັງໝົດເນື້ອທີ່ໂຄງການ
  - ພາຍຫຼັງໄດ້ຮັບຄຳຮ້ອງ ຈາກ ບໍລິສັດ / ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມຂໍ້ 1 ຂ້າງເທິງແລ້ວ, ກົມຄຸ້ມຄອງບໍ່ແຮ່ ໄດ້ຮັບໜັງສືສະເໜີຂອງບໍລິສັດ/ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ, ກົມຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີໄປຍັງຂະແໜງການທີ່ກ່ຽວຂ້ອງສູນກາງ ທີ່ຢູ່ໃນຄະນະກຳມະການປິດບໍ່ແຮ່ຂອງໂຄງການ ເພື່ອຂໍລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ພາຍໃນກຳນົດເວລາ 1 ວັນລັດຖະການ. ພາຍຫຼັງ ໄດ້ລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກຂະແໜງການທີ່ກ່ຽວຂ້ອງຄົບແລ້ວ, ກົມຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີໄປຍັງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອຂໍອະນຸມັດຂໍ້ຕົກລົງ ຂອງທ່ານລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍ ການແຕ່ງຕັ້ງພະນັກງານລັດຖະກອນ ໄປປະຕິບັດວຽກງານຢູ່ຕ່າງແຂວງ ພາຍໃນກຳນົດເວລາ 3 ວັນລັດຖະການ.
  - ຄະນະກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກສູນກາງ ລົງປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ບໍລິສັດ/ຜູ້ລົງທຶນ ເພື່ອກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ພາກສະ ໜາມ ແລະ ເຮັດບົດບັນທຶກຮ່ວມກັນ. ຖ້າຫາກການກວດກາຫາກເຫັນວ່າການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ຖືກຮັບຮອງແລ້ວ ຄະນະກວດກາຕ້ອງໄດ້ປຶກສາຫາລືກັບຄະນະກຳມະການປິດບໍ່ແຮ່ຂອງໂຄງການ ພາຍໃນ 10 ວັນ. ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ລາຍງານການນຳກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຊາບ ແລະ ມີຄຳເຫັນນຳສົ່ງລາຍງານໄປຍັງກະຊວງແຜນການ ແລະ ການລົງທຶນ ໃນນາມຄູ່ສັນຍາ ພິຈາລະນາ ຮັບເອົາເນື້ອທີ່ດັ່ງກ່າວຄືນ ແລ້ວຍົກເລີກສັນຍາສຳປະທານຜັດທະນາບໍ່ແຮ່ ພາຍໃນ 15 ວັນ ບໍລິສັດ/ຜູ້ລົງທຶນ ຈຶ່ງຈະສິ້ນສຸດພັນທະຕາມສັນຍາສຳປະທານຜັດທະນາບໍ່ແຮ່, ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ ພ້ອມທັງຍົກເລີກໃບອະນຸຍາດຂຸດຄົ້ນບໍ່ແຮ່. ແຕ່ຖ້າກໍລະນີການລົງກວດກາເຫັນວ່າ ບໍລິສັດ/ຜູ້ລົງທຶນ ບໍ່ປະຕິບັດສຳເລັດຕາມເງື່ອນໄຂຕາມແຜນການປິດບໍ່ແຮ່ທີ່ກຳນົດໄວ້ ແລະ ບໍລິສັດ/ຜູ້ລົງທຶນກໍບໍ່ເຫັນດີ ຕໍ່ການປະເມີນດັ່ງກ່າວຂອງຄະນະກວດກາ ອາດໃຫ້ມີການປະເມີນໂດຍຜູ້ຊ່ຽວຊານເອກະລາດ ແຕ່ຄ່າໃຊ້ຈ່າຍຂອງຊ່ຽວຊານເອກະສານແມ່ນຄວາມຮັບຜິດຊອບຂອງຜູ້ລົງທຶນ.

- ການສົ່ງເນື້ອທີ່ເຂດສຳປະທານໂຄງການຂຸດຄົ້ນ ແລະ ປຸງແຕ່ແຮ່ທາດກ່ອນກຳນົດການປິດບໍ່ແຮ່
  - ພາຍຫຼັງໄດ້ຮັບຄຳຮ້ອງ ຈາກ ບໍລິສັດ / ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມຂໍ້ 1 ຂ້າງເທິງແລ້ວ, ກົມຄຸ້ມຄອງບໍ່ແຮ່ ໄດ້ຮັບໜັງສືສະເໜີຂອງບໍລິສັດ/ຜູ້ລົງທຶນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ, ກົມຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີໄປຍັງຂະແໜງການທີ່ກ່ຽວຂອງສູນກາງ ທີ່ຢູ່ໃນຄະນະກຳມະການປິດບໍ່ແຮ່ຂອງໂຄງການ ເພື່ອຂໍລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່

ພາຍໃນກຳນົດເວລາ 1 ອັນລັດຖະການ. ພາຍຫຼັງ ໄດ້ລາຍຊື່ພະນັກງານເຂົ້າຮ່ວມເປັນກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກຂະແໜງການທີ່ກ່ຽວຂ້ອງຄົບແລ້ວ, ກົມຄຸ້ມຄອງບໍ່ແຮ່ ຮ່າງໜັງສືສະເໜີໄປຍັງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອຂໍອະນຸມັດຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍ ການແຕ່ງຕັ້ງພະນັກງານລັດຖະກອນ ໄປປະຕິບັດວຽກງານຢູ່ຕ່າງແຂວງ ພາຍໃນ ກຳນົດເວລາ 3 ອັນລັດຖະການ.

- ຄະນະກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຈາກສູນກາງ ລົງປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ບໍລິສັດ/ຜູ້ລົງທຶນ ເພື່ອກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ພາກສະໜາມ ແລະ ເຮັດບົດບັນທຶກຮ່ວມກັນ. ຖ້າຫາກການກວດກາຫາກເຫັນວ່າການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່ ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍ ຄະນະກວດກາ ຕ້ອງໄດ້ປຶກສາຫາລືກັບຄະນະກຳມະການປິດບໍ່ແຮ່ຂອງໂຄງການ ພາຍໃນ 10 ວັນ. ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ລາຍງານການນຳກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຊາບ ແລະ ມີຄຳເຫັນນຳສົ່ງລາຍງານໄປຍັງກະຊວງແຜນການ ແລະ ການລົງທຶນ ໃນນາມຄູ່ສັນຍາ ພິຈາລະນາ ຮັບເອົາເນື້ອທີ່ດັ່ງກ່າວ ຫຼື ທັງໝົດໂຄງການຄືນ ແລ້ວຍົກເລີກ ຫຼື ປ່ຽນແປງສັນຍາສຳປະທານພັດທະນາບໍ່ແຮ່ ພາຍໃນ 15 ວັນ ບໍລິສັດ/ຜູ້ລົງທຶນ ຈຶ່ງຈະສິ້ນສຸດພັນທະ ຫຼື ມີພັນທະຕາມສັນຍາສຳປະທານພັດທະນາບໍ່ແຮ່ທີ່ປ່ຽນແປງ, ຈາກນັ້ນ ກົມຄຸ້ມຄອງບໍ່ແຮ່ ອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ ພ້ອມທັງຍົກເລີກໃບອະນຸຍາດຂຸດຄົ້ນບໍ່ແຮ່ເຂດດັ່ງກ່າວ ຫຼື ທັງໝົດໂຄງການ. ແຕ່ຖ້າກໍລະນີການລົງກວດກາເຫັນວ່າ ບໍລິສັດ/ຜູ້ລົງທຶນ ບໍ່ປະຕິບັດສຳເລັດຕາມເງື່ອນໄຂຕາມແຜນການປິດບໍ່ແຮ່ທີ່ກຳນົດໄວ້ ແລະ ບໍລິສັດ/ຜູ້ລົງທຶນກໍບໍ່ເຫັນດີ ຕໍ່ການປະເມີນດັ່ງກ່າວຂອງຄະນະກວດກາ ອາດໃຫ້ມີການປະເມີນໂດຍຜູ້ຊ່ຽວຊານເອກະລາດ ແຕ່ຄ່າໃຊ້ຈ່າຍຂອງຊ່ຽວຊານເອກະສານແມ່ນຄວາມຮັບຜິດຊອບຂອງຜູ້ລົງທຶນ.

2. ຄວາມຮັບຜິດຊອບ ແລະ ໜ້າທີ່

A. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງ ບໍລິສັດ

- ບໍລິສັດຕ້ອງສະໜອງຂໍ້ມູນ ກ່ຽວກັບເຂດທີ່ຈະຂໍສົ່ງຄືນ (ເຫດຜົນຂອງການສົ່ງພ້ອມຂໍ້ມູນລະອຽດ, ຂໍ້ມູນການຟື້ນຟູເຂດທີ່ຈະຂໍສົ່ງຄືນ).
- ຟື້ນຟູເນື້ອທີ່ຖືກຕ້ອງຕາມເຕັກນິກ, ຮັບປະກັນໃຫ້ມີຄວາມປອດໄພຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ.
- ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ຄະນະກຳມະການໃນການລົງກວດກາ.
- ຮັບຜິດຊອບຕໍ່ ທຸກຄ່າໃຊ້ຈ່າຍກ່ຽວກັບການສົ່ງເນື້ອທີ່ຄືນ (ການລົງກວດກາພື້ນທີ່ຕົວຈິງ, ເປີດກອງປະຊຸມ).

B. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກົມຄຸ້ມຄອງບໍ່ແຮ່

- ຄົ້ນຄວ້າເອກະສານການຂໍສົ່ງເນື້ອທີ່ຄືນ.
- ແຕ່ງຕັ້ງຄະນະກຳມະການລົງກວດກາການຟື້ນຟູເນື້ອທີ່ ແລະ ປິດບໍ່ແຮ່.
- ສະເໜີຫາກະຊວງແຜນການ ແລະ ການລົງທຶນ ພິຈາລະນາຍົກເລີກສັນຍາ ແລະ ຮັບເອົາເນື້ອທີ່ຄືນ. ຂີດໜ້າ;
- ຖອນໃບອະນຸຍາດຂຸດຄົ້ນ.

- ສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປຶກສາຫາລືການນຳໃຊ້ເນື້ອທີ່ໃນຂັ້ນຕໍ່ໄປ.

C. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງ/ແຂວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ.

- ເຂົ້າຮ່ວມເປັນຄະນະລົງກວດກາພື້ນທີ່ຕົວຈິງ ແລະ ປະກອບຄຳເຫັນຕໍ່ການສົ່ງເນື້ອທີ່ຄືນ.
- ປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງໃນການນຳໃຊ້ເນື້ອທີ່ໃນຂັ້ນຕໍ່ໄປ.

D. ຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກະຊວງທີ່ກ່ຽວຂ້ອງ

- ກະຊວງແຜນການ ແລະ ການລົງທຶນ:
  - ເຂົ້າຮ່ວມເປັນຄະນະລົງກວດກາພື້ນທີ່ຕົວຈິງ ແລະ ປະກອບຄຳເຫັນຕໍ່ການສົ່ງເນື້ອທີ່ຄືນ.
  - ພິຈາລະນາ ຮັບເອົາເນື້ອທີ່ດັ່ງກ່າວຄືນ ແລ້ວຍົກເລີກສັນຍາສຳປະທານພັດທະນາບໍ່ແຮ່.
  - ປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງໃນການນຳໃຊ້ເນື້ອທີ່ໃນຂັ້ນຕໍ່ໄປ.
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:
  - ເຂົ້າຮ່ວມເປັນຄະນະລົງກວດກາພື້ນທີ່ຕົວຈິງ ແລະ ປະກອບຄຳເຫັນຕໍ່ການສົ່ງເນື້ອທີ່ຄືນ.
  - ປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງໃນການນຳໃຊ້ເນື້ອທີ່ໃນຂັ້ນຕໍ່ໄປ.

ພາກທີ III:

ຄວາມຮັບຜິດຊອບຂອງກົມຄຸ້ມຄອງບໍ່ແຮ່, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ແລະ ບໍລິສັດ

I. ຄວາມຮັບຜິດຊອບຂອງກົມຄຸ້ມຄອງບໍ່ແຮ່.

1. ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 118 ຂອງກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ແລະ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການກຳນົດສິດ ແລະ ພາລະບົດບາດຂອງ ກົມຄຸ້ມຄອງບໍ່ແຮ່ ທີ່ປະກາດໃຊ້ໃນແຕ່ລະໄລຍະ.
2. ລົງກວດກາ, ຕິດຕາມ ແລະ ແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງໂຄງການບໍ່ແຮ່ ຂອງ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ເປັນແຕ່ລະ ໄລຍະ.
3. ປະຕິບັດຕາມການມອບໝາຍ ແລະ ການຊີ້ນຳ ຂອງການນຳກະຊວງພະລັງງານ ແລະ ບໍ່ແຮ່.

II. ຄວາມຮັບຜິດຊອບຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ.

1. ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 119 ຂອງກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ແລະ ຕາມພາລະບົດບາດຂອງຕົນ ທີ່ປະກາດໃຊ້ໃນແຕ່ລະໄລຍະ.
2. ການອອກອະນຸຍາດໂຄງການບໍ່ແຮ່ຂັ້ນແຂວງຕ້ອງໄດ້ຂໍຄຳເຫັນກ່ຽວກັບເນື້ອທີ່ຈາກກົມຄຸ້ມຄອງບໍ່ແຮ່ ແລະ ກົມ ທໍລະນີສາດ ແລະ ແຮ່ທາດ ກ່ອນສົ່ງຄຳເຫັນໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງພິຈາລະນາ. ພ້ອມນັ້ນຕ້ອງປະສານສົມທົບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ກ່ອນການອອກ ອະນຸຍາດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດອະໂລຫະສຳລັບການກໍ່ສ້າງ ແລະ ແຮ່ທາດອະໂລຫະສຳລັບອຸດສາຫະກຳ.
3. ອອກ, ຕໍ່, ໂຈະ ແລະ ລົບລ້າງ ໃບອະນຸຍາດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດອະໂລຫະສຳລັບການກໍ່ສ້າງ ແລະ ແຮ່ ທາດອະໂລຫະສຳລັບອຸດສາຫະກຳ ໂດຍສອດຄ່ອງຕາມ ມາດຕາ 86, 87, 89, 90, 91 ແລະ 92 ຂອງ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ແລະ ໄດ້ຮັບການເຫັນດີຈາກ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.
4. ອອກ, ຕໍ່, ໂຈະ ແລະ ລົບລ້າງ ໃບອະນຸຍາດຂຸດຄົ້ນວັດຖຸດິບຮັບໃຊ້ໂຮງງານຜະລິດຊີມັງຢູ່ພາຍໃນປະເທດ ຕາມ ການຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ພ້ອມທັງຕິດຕາມວັດຖຸດິບຮັບໃຊ້ໂຮງງານຜະລິດ ຊີມັງ.
5. ປະກອບຄຳເຫັນຕໍ່ການສະເໜີຂໍດຳເນີນກິດຈະການ, ຕໍ່, ໂຈະ, ລົບລ້າງ, ຂະຫຍາຍເນື້ອທີ່, ການປະເມີນຜົນ ແລະ ຈັດປະເພດໂຄງການທີ່ຂັ້ນສູນກາງອອກອະນຸຍາດ.
6. ຮັບຮອງແຜນການຈຳໜ່າຍປະຈຳປີ ແລະ ອອກໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດປະເພດອະໂລຫະ ສຳລັບການກໍ່ສ້າງ ແລະ ອະໂລຫະສຳລັບອຸດສາຫະກຳ ຢູ່ພາຍໃນປະເທດ ສຳລັບໂຄງການຂັ້ນແຂວງອອກ ອະນຸຍາດ.
7. ອອກ, ຕໍ່, ໂຈະ ແລະ ລົບລ້າງ ໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດປະເພດອະໂລຫະສຳລັບການກໍ່ສ້າງ ແລະ ອະໂລຫະສຳລັບອຸດສາຫະກຳໄປຕ່າງປະເທດ ພາຍຫຼັງກົມຄຸ້ມຄອງບໍ່ແຮ່ ຮັບຮອງແຜນການຈຳໜ່າຍແຮ່ ທາດປະຈຳປີ ແລະ ມີໜັງສືມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ຈັດຕັ້ງປະຕິບັດ.

8. ເປັນເຈົ້າການສົມທົບກັບ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ແລະ ບໍລິສັດ ລົງເກັບເກັບຕົວຢ່າງຜະລິດຕະພັນແຮ່ທາດໃນການຈຳໜ່າຍແຕ່ລະຄັ້ງ (ໂຄງການຂັ້ນສູນກາງອອກອະນຸຍາດ) ເພື່ອນຳສົ່ງກົມຄຸ້ມຄອງບໍ່ແຮ່ ນຳສົ່ງຕໍ່ໄປວິໄຈຫາຄຸນນະພາບ ຕາມແຈ້ງການຂອງກົມຄຸ້ມຄອງບໍ່ແຮ່.
9. ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນຂອງສັນຍາສຳປະທານ ແລະ ປົກຫຼັກໝາຍເຂດສຳປະທານກັບຄະນະທີມງານຂັ້ນສູນກາງ.
10. ສ້າງແຜນການນຳໃຊ້ທຶນຄຸ້ມຄອງໂຄງການ (ໂຄງການທີ່ຂັ້ນສູນກາງອອກອະນຸຍາດ) ໂດຍສົມທົບກັບຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ/ນະຄອນ ນຳສະເໜີຫາກົມຄຸ້ມຄອງບໍ່ແຮ່ ຕາມສະພາບຄວາມຈຳເປັນຕົວຈິງຂອງວຽກງານ. ພາຍຫຼັງທີ່ໄດ້ຮັບອະນຸມັດແລ້ວ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ເປັນຜູ້ແບ່ງປັນໃຫ້ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ/ນະຄອນ.
11. ພິຈາລະນາແບ່ງຂັ້ນຄຸ້ມຄອງທີ່ຕົນຮັບຜິດຊອບ ໃຫ້ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ ຕາມສະພາບເງື່ອນໄຂຕົວຈິງ ໂດຍສອດຄ່ອງຕາມລະບຽບກົດໝາຍ.
12. ເປັນເຈົ້າການໃນການຕິດຕາມກວດກາໂດຍກົງ ແລະ ລາຍງານສະຖິຕິການອອກອະນຸຍາດ, ການຂຸດຄົ້ນ, ການຜະລິດ-ຈຳໜ່າຍ, ພ້ອມສະພາບການຈັດຕັ້ງປະຕິບັດວຽກງານຂອງໂຄງການບໍ່ແຮ່ ທັງສູນກາງ ແລະ ທ້ອງຖິ່ນອອກອະນຸຍາດຢ່າງເປັນປົກກະຕິ (ປະຈຳອາທິດ, ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ).
13. ແຕ່ງຕັ້ງວິຊາການ ຫຼື ມອບໃຫ້ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ ລົງປະຈຳສະໜາມໃນໄລຍະກໍ່ສ້າງບໍ່ແຮ່ ແລະ ໄລຍະດຳເນີນການຜັດທະນາບໍ່ແຮ່ ຕາມແຈ້ງການຂອງກົມຄຸ້ມຄອງບໍ່ແຮ່.

III. ຄວາມຮັບຜິດຊອບຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ.

1. ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 120 ຂອງກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ແລະ ຕາມພາລະບົດບາດຂອງຕົນ ທີ່ປະກາດໃຊ້ໃນແຕ່ລະໄລຍະ.
2. ອອກ, ຕໍ່, ໂຈະ ແລະ ລົບລ້າງ ໃບອະນຸຍາດຂຸດຄົ້ນ ດິນໜຽວ (ຮັບໃຊ້ການຜະລິດດິນຈີ່ ແລະ ເຄື່ອງປັ້ນດິນເຜົາ), ດິນດຳ-ແດງ ແລະຫີນຮັບໃຊ້ການກໍ່ສ້າງ ພາຍໃນເມືອງຂອງຕົນ (ສຳລັບຫົວໜ່ວຍທຸລະກິດຄອບຄົວຂອງພົນລະເມືອງລາວ). ສຳລັບຫີນແຮ່-ຊາຍ ແມ່ນໃຫ້ປະຕິບັດຕາມການຊີ້ນຳຂອງການນຳແຕ່ລະແຂວງ.
3. ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນຂອງສັນຍາສຳປະທານ ແລະ ປົກຫຼັກໝາຍເຂດສຳປະທານກັບຄະນະທີມງານຂັ້ນສູນກາງ.
4. ປະສານສົມທົບພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ກ່ອນການອອກອະນຸຍາດຂຸດຄົ້ນດິນໜຽວ (ຮັບໃຊ້ການຜະລິດດິນຈີ່ ແລະ ເຄື່ອງປັ້ນດິນເຜົາ), ດິນດຳ-ແດງ, ຫີນຮັບໃຊ້ການກໍ່ສ້າງພາຍໃນເມືອງຂອງຕົນ, ແຮ່ທາດອະໂລຫະສຳລັບການກໍ່ສ້າງ ແລະ ແຮ່ທາດອະໂລຫະສຳລັບອຸດສາຫະກຳ ຕາມການມອບໝາຍຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.
5. ເກັບຕົວຢ່າງຜະລິດຕະພັນແຮ່ທາດໃນການຈຳໜ່າຍແຕ່ລະຄັ້ງ (ໂຄງການຂັ້ນສູນກາງອອກອະນຸຍາດ) ຕາມການມອບໝາຍຂອງກົມຄຸ້ມຄອງບໍ່ແຮ່ ແລະ ພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ.
6. ປະກອບຄຳເຫັນຕໍ່ການສະເໜີຂໍດຳເນີນກິດຈະການ, ຕໍ່, ໂຈະ, ລົບລ້າງ, ຂະຫຍາຍເນື້ອທີ່, ການປະເມີນຜົນ ແລະ ຈັດປະເພດໂຄງການທີ່ຂັ້ນທ້ອງຖິ່ນ.
7. ໄດ້ຮັບເງິນທຶນຄຸ້ມຄອງໂຄງການ (ໂຄງການທີ່ຂັ້ນສູນກາງອອກອະນຸຍາດ) ຈຳນວນ 25% ຕໍ່ໂຄງການ (ສຳລັບຫ້ອງການພະລັງງານ ແລະ ບໍ່ແຮ່ ທີ່ໂຄງການຕັ້ງຢູ່).

8. ເປັນເຈົ້າການໃນການຕິດຕາມກວດກາໂດຍກົງ ແລະ ລາຍງານສະຖິຕິການອອກອະນຸຍາດ, ການຂຸດຄົ້ນ, ການຜະລິດ-ຈຳໜ່າຍ ພ້ອມສະພາບການຈັດຕັ້ງປະຕິບັດວຽກງານຂອງໂຄງການບໍ່ແຮ່ ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ ຢ່າງເປັນປົກກະຕິ (ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ) ແລະ ລາຍງານກົມຄຸ້ມຄອງບໍ່ແຮ່ໂດຍກົງ ໃນກໍລະນີມີຄວາມຈຳເປັນ.
9. ແຕ່ງຕັ້ງວິຊາການລົງປະຈຳສະໜາມ ໃນໄລຍະກໍ່ສ້າງບໍ່ແຮ່ ແລະ ໄລຍະດຳເນີນການພັດທະນາບໍ່ແຮ່ ຕາມການມອບໝາຍ ຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ.

IV. ຄວາມຮັບຜິດຊອບຂອງບໍລິສັດ.

1. ພາຍຫຼັງເຊັນສັນຍາສຳປະທານ ຢ່າງຊ້າແມ່ນ 10 ວັນລັດຖະການ ຕ້ອງສະເໜີກົມຄຸ້ມຄອງບໍ່ແຮ່ ເພື່ອລົງເຜີຍແຜ່ເນື້ອໃນຂອງສັນຍາສຳປະທານ ແລະ ປັກຫຼັກໝາຍເຂດສຳປະທານ.
2. ເຂົ້າຮ່ວມການລົງເຜີຍແຜ່ເນື້ອໃນຂອງສັນຍາສຳປະທານ ແລະ ປັກຫຼັກໝາຍເຂດສຳປະທານ.
3. ປະກອບຂໍ້ມູນຕາມແບບຟອມທີ່ກົມຄຸ້ມຄອງບໍ່ແຮ່ກຳນົດ ເພື່ອຂໍ້ອະນຸມັດອອກຂໍ້ຕົກລົງ ວ່າດ້ວຍການຂຸດຄົ້ນ ແລະ ດຳເນີນໂຮງງານປຸງແຕ່ງແຮ່ທາດ.
4. ສະເໜີຫາກົມຄຸ້ມຄອງບໍ່ແຮ່ ເພື່ອຮັບຮອງແຜນການຈຳໜ່າຍຜະລິດຕະພັນແຮ່ທາດປະຈຳປີ ແລະ ການ ຈຳໜ່າຍແຕ່ລະຄັ້ງ.
5. ກ່ອນການຈຳໜ່າຍແຮ່ທາດແຕ່ລະຄັ້ງ ບໍລິສັດຕ້ອງປະຕິບັດພັນທະທາງດ້ານການເງິນຄົບຖ້ວນຕາມທີ່ກຳນົດໄວ້ໃນສັນຍາສຳປະທານ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.
6. ຕ້ອງມີຊິ່ງຊັ່ງນ້ຳໜັກປະຈຳພາກສະໜາມທີ່ໄດ້ມາດຕະຖານ; ກໍລະນີໂຄງການຄຳຕ້ອງມີໜ່ວຍວັດແທກນ້ຳໜັກມາດຕະຖານ (Calibration weight) ເພື່ອກວດກາຊິ່ງຊັ່ງນ້ຳໜັກ ຫຼື ມີເຄື່ອງສະແກນເພື່ອວິໄຈຄຸນນະພາບແຮ່ ແລະ ບໍລິສັດຕ້ອງຕິດຕັ້ງກ້ອງວົງຈອນປິດໃສ່ເຂດທີ່ມີການຜະລິດ, ຫຼອມຄຳ ແລະ ບ່ອນທີ່ມີຄວາມສ່ຽງໃນການລັກລອບຂຸກເຊື່ອງແຮ່ຄຳ.
7. ຮັບຜິດຊອບຄ່າໃຊ້ຈ່າຍ ແລະ ຄ່າແຮງງານຂອງພະນັກງານລັດ ທີ່ລົງເຜີຍແຜ່ເນື້ອໃນສັນຍາສຳປະທານ, ປັກຫຼັກໝາຍ ເຂດສຳປະທານ, ລົງເກັບຕົວຢ່າງແຮ່ທາດ ແລະ ວິໄຈແຮ່ທາດ, ການປະຈຳຢູ່ພາກສະ ໜາມ ແລະ ການລົງຕິດຕາມກວດກາໂຄງການເປັນແຕ່ລະໄລຍະ.

ໝວດທີ II ນິຕິກຳທີ່ກ່ຽວຂ້ອງ

1. ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ສະບັບເລກທີ 90/ນຍ, ລົງວັນທີ 9/6/2008
2. ຄຳສັ່ງຂອງນາຍົກລັດຖະມົນຕີກ່ຽວກັບການກວດກາ ແລະ ຄຸ້ມຄອງການສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງຄຳ ຕິກຂ້ອນ ສະບັບເລກທີ 16/ນຍ, ລົງວັນທີ 27/8/2008
3. ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບເລກທີ 0481/ພບ, ລົງວັນທີ 20/4/2012
4. ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ສະບັບ ເລກທີ 0352/ພບ, ລົງວັນທີ 13/3/2012
5. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການນຳໃຊ້ທຶນພັດທະນາຊຸມຊົນຂອງຂະແໜງອຸດສາຫະກຳບໍ່ແຮ່ ສະບັບເລກທີ 0870/ພບ, ລົງວັນທີ 22/6/2015
6. ຂໍ້ຕົກລົງຂອງທ່ານ ລັດຖະມົນຕີ ວ່າການກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການອະນຸມັດນຳໃຊ້ຂໍ້ແນະນຳ ການລາຍງານປະຈຳໄຕມາດ ແລະ ປະຈຳປີ ກ່ຽວກັບວຽກງານຄຸ້ມຄອງບໍ່ແຮ່ ສະບັບເລກທີ 1882/ພບ, ລົງວັນທີ 23/12/2015
7. ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ຄຳແນະນຳຂອງກົມບໍ່ແຮ່ ສະບັບເລກທີ 1107/ພບ, ລົງວັນທີ 16/6/2014
8. ລະບຽບວ່າດ້ວຍການສົ່ງຕົວຢ່າງແຮ່ທາດໄປວິໄຈ ແລະ ທົດລອງເຕັກໂນໂລຊີ ໃນໄລຍະສ້າງບົດວິພາກ ເສດຖະກິດ-ເຕັກນິກ, ຂຸດຄົ້ນ, ເສີມຄຸນຄ່າ ແລະ ແຍກແຮ່ທາດ ສະບັບເລກທີ 1952/ພບ, ລົງວັນທີ 25/12/2014
9. ລະບຽບການວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ສະບັບເລກທີ 0760/ ພບ, ລົງວັນທີ 28/5/2015
10. ຄຳແນະນຳການຈັດຕັ້ງປະຕິບັດ 7 ຫຼັກການປະເມີນຜົນ ສະບັບເລກທີ 46/ກບຮ.6, ລົງວັນທີ 24/7/2015
11. ຂໍແນະນຳຊົ່ວຄາວກ່ຽວກັບການຈ່າຍຄ່າສຳປະທານ, ການປັກຫຼັກໝາຍ ແລະ ການອອກໃບອະນຸຍາດຂຸດຄົ້ນບໍ່ແຮ່ ສະບັບເລກທີ 0084/ກບຮ, ລົງວັນທີ 22/1/2014
12. ບົດບັນທຶກການມອບ-ໂອນວຽກງານຄຸ້ມຄອງການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ ລະຫວ່າງ ກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ຄົ້ງວັນທີ 10/11/2010
13. ບົດບັນທຶກການແບ່ງການຄຸ້ມຄອງ, ອອກໃບອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງແຮ່ທາດ ແລະ ຫຼອມແຮ່ທາດ ລະຫວ່າງ ກະຊວງພະລັງງານ ແລະ ບໍ່ແຮ່ ກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ງວັນທີ 25/5/2011
14. ບົດບັນທຶກກອງປະຊຸມການແບ່ງຄວາມຮັບຜິດຊອບກ່ຽວກັບການຄຸ້ມຄອງອຸດສາຫະກຳປຸງແຕ່ງແຮ່ທາດ ລະຫວ່າງກົມອຸດສາຫະກຳ ແລະ ຫັດຖະກຳ ກັບ ກົມບໍ່ແຮ່ ຄົ້ງວັນທີ 8/8/2013

ໝວດທີ III ອະທິບາຍຄຳສັບ ແລະ ຄຳຫຍໍ້

- ໂຄງການສຳປະທານບໍ່ແຮ່: ແມ່ນໂຄງການບໍ່ແຮ່ທີ່ດຳເນີນຕາມຂັ້ນຕອນ ແລະ ປະຕິບັດພັນທະທາງດ້ານການເງິນຕາມລະບຽບກົດໝາຍ.
- ໂຄງການບໍ່ແຮ່ ຮູບແບບທົດລອງ: ແມ່ນໂຄງການບໍ່ແຮ່ທີ່ບໍ່ໄດ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ (ປະຕິບັດຕາມນະໂຍບາຍຂອງລັດຖະບານ ໃນແຕ່ລະໄລຍະ).
- ໂຄງການ ທີ່ບໍ່ມີເຂດສຳປະທານ: ແມ່ນໂຄງການທີ່ດຳເນີນສະເພາະໂຄງການປຸງແຕ່ງແຮ່ທາດ (ບໍ່ມີເຂດສຳປະທານເປັນຂອງຕົນເອງ)
- Fs: ໝາຍເຖິງ: ບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ລມຕ ພບ: ຫຍໍ້ມາຈາກ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.
- ກຜທ: ຫຍໍ້ມາຈາກ ກະຊວງແຜນການ ແລະ ການລົງທຶນ.
- ບົດເຕັກນິກ: ແມ່ນບົດສຶກສາ ແລະ ຄາດຄະເນດ້ານເຕັກນິກ ທີ່ປະກອບດ້ວຍ: ບົດແຜນການຂຸດຄົ້ນແຮ່ທາດ, ບົດແຜນການປຸງແຕ່ງແຮ່ທາດ, ບົດອອກແບບອ່າງຫາງແຮ່, ບົດແຜນການປິດບໍ່ແຮ່.
- ບົດແຜນການຂຸດຄົ້ນແຮ່ທາດ: ແມ່ນບົດສຶກສາ, ຄາດຄະເນເຕັກນິກ ແລະ ອົງປະກອບທີ່ກ່ຽວຂ້ອງໃນການຂຸດຄົ້ນ.
- ບົດແຜນການປຸງແຕ່ງແຮ່ທາດ: ແມ່ນບົດສຶກສາ, ຄາດຄະເນເຕັກນິກ ແລະ ອົງປະກອບທີ່ກ່ຽວຂ້ອງໃນການປຸງແຕ່ງແຮ່ທາດ.
- ບົດອອກແບບອ່າງຫາງແຮ່: ແມ່ນບົດສຶກສາ, ຄາດຄະເນເຕັກນິກ ແລະ ອົງປະກອບທີ່ກ່ຽວຂ້ອງໃນການອອກແບບອ່າງຫາງແຮ່.
- ບົດແຜນການປິດບໍ່ແຮ່: ແມ່ນບົດສຶກສາ, ຄາດຄະເນເຕັກນິກ ແລະ ອົງປະກອບທີ່ກ່ຽວຂ້ອງໃນການປິດບໍ່ແຮ່.
- ບົດວິເຄາະທາງດ້ານການເງິນ: ໝາຍເຖິງ ບົລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ຄລທ.ສ: ຫຍໍ້ມາຈາກ ຄະນະກຳມະການສິ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ.
- ຄຕຮ: ຫຍໍ້ມາຈາກ ຄະນະກຳມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ.
- ຄກສ: ຫຍໍ້ມາຈາກ ຄະນະກຳມະການເພື່ອສຶກສາ, ກວດຜ່ານ ແລະ ຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ.
- ກຄຮ: ຫຍໍ້ມາຈາກ ກົມຄຸ້ມຄອງບໍ່ແຮ່.
- ກທຮ: ຫຍໍ້ມາຈາກ ກົມທໍລະນີສາດ ແລະ ແຮ່ທາດ.
- ສພບ: ຫຍໍ້ມາຈາກ ສະຖາບັນຄົ້ນຄວ້າ ພະລັງງານ ແລະ ບໍ່ແຮ່
- ກຜທ: ຫຍໍ້ມາຈາກ ກະຊວງແຜນການ ແລະ ການລົງທຶນ.
- ກຊສ: ຫຍໍ້ມາຈາກ ກະຊວງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ກງ: ຫຍໍ້ມາຈາກ ກະຊວງການເງິນ.

ລາຍຊື່ຄະນະຮັບຜິດຊອບສ້າງຄູ່ມືແນະນຳ

ຄະນະຊີ້ນຳ

1. ທ່ານ ປອ ດາວວົງ ພອນແກ້ວ	ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່
2. ທ່ານ ທອງພັດ ອິນທະວົງ	ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່
3. ທ່ານ ສຸຂັນສັກ ສີສຸກ	ຫົວໜ້າກົມຄຸ້ມຄອງບໍ່ແຮ່
4. ທ່ານ ແກ້ວສະໜອນ ວິນນະລາດ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່
5. ທ່ານ ສະຖາພອນ ດວງຕາວັນ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່
6. ທ່ານ ນ. ອຳວຽງ ເພົ້າວົງໄຊ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່

ຄະນະເນື້ອໃນ

1. ທ່ານ ສຸຂັນສັກ ສີສຸກ	ຫົວໜ້າກົມຄຸ້ມຄອງບໍ່ແຮ່
2. ທ່ານ ແກ້ວສະໜອນ ວິນນະລາດ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່
3. ທ່ານ ສະຖາພອນ ດວງຕາວັນ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່
4. ທ່ານ ນ. ອຳວຽງ ເພົ້າວົງໄຊ	ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່
5. ທ່ານ ສົມສະຫວັນ ຄຳມັ່ງໄຊ	ຫົວໜ້າພະແນກ
6. ທ່ານ ເພັ່ງສະຫວັນ ແສນສະຖິດ	ຫົວໜ້າພະແນກ
7. ທ່ານ ມາດມະໂນ ວິພາແກ້ວ	ຮັກສາການຫົວໜ້າພະແນກ
8. ທ່ານ ວອນນະເດດ ມະນີລາ	ຮັກສາການຫົວໜ້າພະແນກ
9. ທ່ານ ອິນພະວົງ ບຸນມະນີ	ຮັກສາການຫົວໜ້າພະແນກ
10. ທ່ານ ສີພອນ ໂຮມເງິນ	ຮອງຫົວໜ້າພະແນກ
11. ທ່ານ ບຸນຄຳ ປັນຍາວົງ	ຮອງຫົວໜ້າພະແນກ
12. ທ່ານ ວົງເພັດ ລາດຊະວົງ	ວິຊາການ

ຄະນະຮຽບຮຽງ

1. ທ່ານ ສົມສະຫວັນ ຄຳມັ່ງໄຊ	ຫົວໜ້າພະແນກ
2. ທ່ານ ເພັ່ງສະຫວັນ ແສນສະຖິດ	ຫົວໜ້າພະແນກ
3. ທ່ານ ມາດມະໂນ ວິພາແກ້ວ	ຮັກສາການຫົວໜ້າພະແນກ
4. ທ່ານ ວອນນະເດດ ມະນີລາ	ຮັກສາການຫົວໜ້າພະແນກ
5. ທ່ານ ອິນພະວົງ ບຸນມະນີ	ຮັກສາການຫົວໜ້າພະແນກ
6. ທ່ານ ນ. ເຕົ້າຄຳ ວັນນະຈັກ	ຮັກສາການຫົວໜ້າພະແນກ
7. ທ່ານ ສີພອນ ໂຮມເງິນ	ຮອງຫົວໜ້າພະແນກ
8. ທ່ານ ບຸນຄຳ ປັນຍາວົງ	ຮອງຫົວໜ້າພະແນກ

9. ທ່ານ ນ. ວິນນະສອນ ພົມມະສຸກ	ຮອງຫົວໜ້າພະແນກ
10. ທ່ານ ນ. ບົວວັນ ຈັນບຸນມີ	ຮອງຫົວໜ້າພະແນກ
11. ທ່ານ ນ. ສີໄພວອນ ສຸວິງທາ	ຮອງຫົວໜ້າພະແນກ
12. ທ່ານ ວິງທອງ ປາກາສິດ	ຮອງຫົວໜ້າພະແນກ
13. ທ່ານ ອາຄົມ ໄຊລາດ	ຮອງຫົວໜ້າພະແນກ
14. ທ່ານ ແກ້ວປະເສີດ ເກຕຸມາລາ	ຮອງຫົວໜ້າພະແນກ
15. ທ່ານ ນະແກ້ວ ບຸນນະວົງ	ຮອງຫົວໜ້າພະແນກ
16. ທ່ານ ວົງເພັດ ລາດຊະວົງ	ວິຊາການ
17. ທ່ານ ສີອຳພອນ ໄຊສົມບັດ	ວິຊາການ
18. ທ່ານ ນ ຄອນສະໄໝ ອາດສະດາຈັນ	ວິຊາການ
19. ທ່ານ ນ ນິດດາວັນ ແກ້ວວໍລະວົງສາ	ວິຊາການ
20. ທ່ານ ອານົງສັກ ກຸມພົນ	ວິຊາການ
21. ທ່ານ ພູວົນ ຄຳພູວອນ	ວິຊາການ